ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

ກະຊວງອຸດສາຫະກຳ ແລະ ການຄ້າ

# ແຜນຍຸດທະສາດ
# ພັດທະນາຊັບພະຍາກອນມະນຸດ
# ຂອງຂະແໜງອຸດສາຫະກຳ ແລະ ການຄ້າ
# ແຕ່ປີ 2021-2025 ແລະ ວິໄສທັດຮອດປີ 2030

ກົມຈັດຕັ້ງ ແລະ ພະນັກງານ

ທັນວາ 2021

## ສາລະບານ


ຄຳນຳ

I. ພາກສະເໜີ....................1

1. ບ່ອນອີງ....................1

2. ຄວາມເປັນມາ....................1

3. ຈຸດປະສົງ....................2

II. ສະພາບການພັດທະນາ ແລະ ຄຸ້ມຄອງພະນັກງານ-ລັດຖະກອນໃນໄລຍະຜ່ານມາ....................2

1. ສະພາບພະນັກງານ....................2

2. ສະພາບກົງຈັກການຈັດຕັ້ງຂອງຂະແໜງ ອຄ....................3

3. ຜົນສຳເລັດ ແລະ ຂໍ້ຄົງຄ້າງ....................4

3.1 ການກໍ່ສ້າງ ແລະ ບຳລຸງພະນັກງານ-ລັດຖະກອນ ທາງດ້ານການເມືອງ-ແນວຄິດ....................4

3.2 ການກໍ່ສ້າງ ແລະ ບຳລຸງພະນັກງານ-ລັດຖະກອນ ທາງດ້ານວິຊາສະເພາະ....................4

3.3 ປັບປຸງຄຸນນະພາບທາງດ້ານການຈັດຕັ້ງໃຫ້ມີຄວາມເຂັ້ມແຂງ....................5

3.4 ການປັບປຸງຄຸນນະພາບພະນັກງານ-ລັດຖະກອນໃຫ້ມີປະສິດທິພາບ ແລະ ປະສິດທິຜົນ....................6

3.5 ການປະຕິບັດນະໂຍບາຍຕໍ່ພະນັກງານ-ລັດຖະກອນ....................6

4. ກາລະໂອກາດ ແລະ ສິ່ງທ້າທາຍ....................7

4.1 ກາລະໂອກາດ....................7

4.2 ສິ່ງທ້າທາຍ....................7

III. ຍຸດທະສາດການພັດທະນາ ແລະ ຄຸ້ມຄອງພະນັກງານ-ລັດຖະກອນ ຂອງຂະແໜງອຸດສາຫະກຳ ແລະ ການຄ້າ (ອຄ) ຮອດປີ 2025 ແລະ ວິໄສທັດຮອດປີ 2030....................7

1. ວິໄສທັດຮອດປີ 2030....................7

2. ເປົ້າໝາຍລວມ....................7

3. ຍຸດທະສາດຮອດປີ 2025[1]....................8

3.1 ເພີ່ມທະວີການເມືອງ-ແນວຄິດ ໃຫ້ພະນັກງານ-ລັດຖະກອນ ຂອງຂະແໜງ ອຄ[2]....................8

3.2 ຝຶກອົບຮົມ ແລະ ພັດທະນາ ພະນັກງານ-ລັດຖະກອນ ຂອງຂະແໜງ ອຄ ໃຫ້ມີປະສິດທິພາບ ແລະ ປະສິດທິຜົນສູງ (Training and Development)[3]....................9

3.3 ພັດທະນາດ້ານການຈັດຕັ້ງ (Organizational Development)[4]....................10

3.4 ພັດທະນາວິຊາຊີບພະນັກງານ-ລັດຖະກອນ (Career Development)[5]....................11


[1]ໂຄງສ້າງຂອງບົດຮຽນHRD. ຕົວແບບໂຄງສ້າງ ກຊສສ, ກຊກງ, ກຊສສ, ກຊຊສ

[2]ມະຕິຂອງພັກ ເຊັ່ນ: 4 ບຸກທະລຸ. ກົດໝາຍລັດຖະກອນ. ຮຽນທິດສະດີ 45 ວັນ.

[3]ດຳລັດຝຶກອົບຮົມ

[4]ຄຳສັ່ງ 03 ຂອງນາຍົກ.

[5]ວິທະຍາໄລການຄ້າ

3.5 ສ້າງຊັບພະຍາກອນມະນຸດຂອງຂະແໜງ ອຄ ໃຫ້ມີຄວາມຮູ້, ຄວາມສາມາດທາງດ້ານລະບົບໄອທີ ໂດຍ ທັນເປັນທັນສະໄໝເທື່ອລະກ້າວ.....11
IV. ການຕິດຕາມ, ປະເມີນຜົນ ແລະ ການລາຍງານ.....12
V. ມາດຕະການຈັດຕັ້ງປະຕິບັດ.....12

ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

ກະຊວງອຸດສາຫະກຳ ແລະ ການຄ້າ

ເລກທີ 1195/ອຄ.ກຈພງ

ນະຄອນຫລວງວຽງຈັນ, ວັນທີ 07 ທັນວາ 2021

# ຂໍ້ຕົກລົງ

## ວ່າດ້ວຍການຮັບຮອງ ແລະ ປະກາດໃຊ້ແຜນຍຸດທະສາດພັດທະນາຊັບພະຍາກອນມະນຸດ ຂອງຂະແໜງອຸດສາຫະກຳ ແລະ ການຄ້າ ແຕ່ປີ 2021-2025 ແລະ ວິໄສທັດຮອດປີ 2030

- ອີງຕາມ ດຳລັດສະບັບເລກທີ 604/ນຍ, ລົງວັນທີ 15 ຕຸລາ 2021 ວ່າດ້ວຍການຈັດຕັ້ງ ແລະ ການເຄື່ອນໄຫວຂອງ ກະຊວງອຸດສາຫະກຳ ແລະ ການຄ້າ;
- ອີງຕາມ ດຳລັດສະບັບເລກທີ 95/ລບ, ລົງວັນທີ 26 ເມສາ 2016 ວ່າດ້ວຍການຮັບຮອງ ແລະ ປະກາດໃຊ້ຍຸດທະສາດ ການພັດທະນາຊັບພະຍາກອນມະນຸດແຫ່ງຊາດຮອດປີ 2025;
- ອີງຕາມ ການຄົ້ນຄວ້າ ແລະ ນຳສະເໜີຂອງກົມຈັດຕັ້ງ ແລະ ພະນັກງານ.

**ລັດຖະມົນຕີ ກະຊວງອຸດສາຫະກຳ ແລະ ການຄ້າ ຕົກລົງ :**

ມາດຕາ 1: ຮັບຮອງ ແລະ ປະກາດໃຊ້ ແຜນຍຸດທະສາດພັດທະນາຊັບພະຍາກອນມະນຸດຂອງຂະແໜງອຸດສາຫະກຳ ແລະ ການາຄ້າ ແຕ່ປີ 2021-2025 ແລະ ວິໄສທັດຮອດປີ 2025 ເພື່ອນຳໃຊ້ຢ່າງເປັນທາງການ.

ມາດຕາ 2: ໃຫ້ກົມຈັດຕັ້ງ ແລະ ພະນັກງານ, ຫ້ອງການ, ບັນດາກົມ, ສະຖາບັນອຸດສາຫະກຳ ແລະ ການຄ້າ, ພະແນກອຸດສາຫະກຳ ແລະ ການຄ້າແຂວງ, ນະຄອນຫຼວງ, ຫ້ອງການອຸດສາຫະກຳ ແລະ ການຄ້າເມືອງ, ນະຄອນ ແລະ ພາກສ່ວນທີ່ກ່ຽວຂ້ອງຈົ່ງຮັບຮູ້ ແລະ ຈັດຕັ້ງປະຕິບັດຂໍ້ຕົກລົງສະບັບນີ້ໃຫ້ໄດ້ຮັບຜົນເປັນຢ່າງດີ.

ມາດຕາ 3: ຂໍ້ຕົກລົງສະບັບນີ້ມີຜົນສັກສິດນັບແຕ່ວັນທີລົງລາຍເຊັນເປັນຕົ້ນໄປ.

**ລັດຖະມົນຕີ**

ບ່ອນນຳສົ່ງ:

1. ຄະນະນຳກະຊວງ 04 ສະບັບ
2. ກະຊວງສຶກສາທິການ ແລະ ກິລາ 01 ສະບັບ
3. ບັນດາກົມ 14 ສະບັບ
4. ສຳເນົາ 03 ສະບັບ

ປອ.ຄຳແພງ ໄຊສົມແພງ

# ຄຳນຳ

ຍຸດທະສາດພັດທະນາຊັບພະຍາກອນມະນຸດຂອງຂະແໜງອຸດສາຫະກຳ ແລະ ການຄ້າ (ອຄ) ແຕ່ປີ 2021-2025 ແລະ ວິໄສທັດຮອດປີ 2030 ສະບັບນີ້ ສ້າງຂຶ້ນເພື່ອຜັນຂະຫຍາຍມະຕິກອງປະຊຸມໃຫຍ່ຄັ້ງທີ XI ຂອງພັກ ແລະ ຍຸດທະສາດພັດທະນາຊັບພະຍາກອນມະນຸດແຫ່ງຊາດ ຮອດປີ 2025. ຈຸດປະສົງເພື່ອວາງແຜນພັດທະນາຊັບພະຍາກອນມະນຸດຂອງຂະແໜງ ອຄ ໃຫ້ສອດຄ່ອງກັບໜ້າທີ່ການເມືອງໃນໄລຍະໃໝ່, ມີຊັບພະຍາກອນມະນຸດທີ່ມີຄຸນນະພາບ ສາມາດຕອບສະໜອງໄດ້ຕາມຄວາມຕ້ອງການໃນການພັດທະນາວຽກງານ ອຄ ໃຫ້ສາມາດເຊື່ອມໂຍງເຂົ້າກັບພາກພື້ນ ແລະ ສາກົນ. ນອກຈາກນີ້, ເພື່ອແນໃສ່ພັດທະນາພະນັກງານ-ລັດຖະກອນຂອງຂະແໜງ ອຄ ເພື່ອຮອງຮັບຕາມແຜນພັດທະນາອຸດສາຫະກຳປຸງແຕ່ງ ແລະ ການຄ້າ 5 ປີ (2021-2025), ແຜນຍຸດທະສາດ SME, ຍຸດທະສາດອຳນວຍຄວາມສະດວກທາງດ້ານການຄ້າ ແລະ ແຜນອື່ນໆ ຂອງຂະແໜງອຸດສາຫະກຳ ແລະ ການຄ້າ.

ແຜນຍຸດທະສາດສະບັບນີ້ ປະກອບດ້ວຍ 05 ຍຸດທະສາດໃຫຍ່ຄື: 1. ເພີ່ມທະວີການເມືອງ-ແນວຄິດໃຫ້ພະນັກງານ-ລັດຖະກອນ ຂອງຂະແໜງ ອຄ. 2. ຝຶກອົບຮົມ ແລະ ພັດທະນາພະນັກງານ-ລັດຖະກອນ ຂອງຂະແໜງ ອຄ ໃຫ້ມີປະສິດທິພາບ ແລະ ປະສິດທິຜົນສູງ. 3. ປັບປຸງດ້ານການຈັດຕັ້ງໃຫ້ກະທັດຮັດ, ສົມເຫດສົມຜົນ, ແລະ ມີປະສິດຕິພາບ. 4. ພັດທະນາວິຊາຊີບພະນັກງານ-ລັດຖະກອນ. 5. ສ້າງຊັບພະຍາກອນມະນຸດຂອງຂະແໜງ ອຄ ໃຫ້ມີຄວາມຮູ້, ຄວາມສາມາດທາງດ້ານການນຳໃຊ້ເຕັກໂນໂລຊີດີຈີຕອນ ແລະ ICT ເຂົ້າໃນການພັດທະນາວຽກງານອຸດສາຫະກຳ ແລະ ການຄ້າ ເພື່ອທັນເປັນທັນສະໄໝເທື່ອລະກ້າວ.

ແຜນຍຸດທະສາດສະບັບນີ້ ຈະເປັນເຄື່ອງມືໃຫ້ແກ່ຄະນະນຳກະຊວງ, ກົມຈັດຕັ້ງ ແລະ ພະນັກງານ, ບັນດາກົມກ່ຽວຂ້ອງອ້ອມຂ້າງ ກະຊວງ ອຄ, ພະແນກ ອຄ ແຂວງ, ນະຄອນຫຼວງ ແລະ ຫ້ອງການ ອຄ ເມືອງ, ນະຄອນ ເພື່ອນຳໄປຜັນຂະຫຍາຍ ແລະ ຈັດຕັ້ງປະຕິບັດໃຫ້ເກີດຜົນປະໂຫຍດສູງສຸດ. ນອກຈາກນີ້, ຍັງເປັນການວາງແຜນຝຶກອົບຮົມ ແລະ ພັດທະນາພະນັກງານ-ລັດຖະກອນ ຂອງຂະແໜງ ອຄ ເພື່ອເຮັດໃຫ້ວຽກງານດັ່ງກ່າວດຳເນີນເປັນລະບົບ, ສອດຄ່ອງກັບແນວທາງຂອງພັກ ແລະ ລັດຖະບານທີ່ວາງອອກແຕ່ລະໄລຍະ ແນໃສ່ເພີ່ມຄວາມຮູ້, ຄວາມສາມາດໃຫ້ແກ່ພະນັກງານ-ລັດຖະກອນຂອງຂະແໜງ ອຄ ໃຫ້ມີປະສິທິພາບ ແລະ ປະສິດທິຜົນສູງ.

ໃນນາມຄະນະພັກ, ຄະນະນຳກະຊວງ ອຄ ຂໍສະແດງຄວາມຂອບໃຈ ແລະ ຮູ້ບຸນຄຸນມາຍັງທຸກພາກສ່ວນທີ່ໄດ້ປະກອບສ່ວນຄຳຄິດຄຳເຫັນ ແລະ ໄດ້ໃຫ້ຄວາມຮ່ວມມືໃນການສະໜອງຂໍ້ມູນເຂົ້າໃນແຜນຍຸດທະສາດສະບັບນີ້ຢ່າງສົມບູນ. ເຖິງຢ່າງໃດກໍ່ຕາມແຜນຍຸດທະສາດສະບັບນີ້ປາສະຈາກບໍ່ໄດ້ຂໍ້ຂາດຕົກບົກຜ່ອງ ຫວັງຢ່າງຍິ່ງວ່າບັນດາທ່ານຜູ້ອ່ານ ແລະ ຜູ້ນຳໃຊ້ຈະໃຫ້ຂໍ້ຄິດເຫັນທີ່ເປັນປະໂຫຍດໃນການປັບປຸງໃນຄັ້ງຕໍ່ໄປ ຂໍຂອບໃຈ.

ນະຄອນຫຼວງວຽງຈັນ, ວັນທີ 07 ທັນວາ 2021

ລັດຖະມົນຕີ

ລັດຖະມົນຕີ

ປອ. ຄຳແພງ ໄຊສົມແພງ

## I. ພາກສະເໜີ.

### 1. ບ່ອນອີງ.

ແຜນຍຸດທະສາດພັດທະນາຊັບພະຍາກອນມະນຸດຂອງຂະແໜງອຸດສາຫະກຳ ແລະ ການຄ້າ ແຕ່ປີ 2021-2025 ແລະ ວິໄສທັດຮອດປີ 2030 ສະບັບນີ້ ໄດ້ອີງໃສ່ບັນດາແນວທາງຂອງພັກ, ກົດໝາຍ ແລະ ລະບຽບການຂອງຂະແໜງການກ່ຽວຂ້ອງ ເປັນຕົ້ນແມ່ນ ທິດບຸກທະລຸທາງດ້ານຊັບພະຍາກອນມະນຸດ ທີ່ນອນຢູ່ໃນສີ່ບຸກທະລຸ ຂອງມະຕິກອງປະຊຸມໃຫຍ່ ຄັ້ງທີ IX ຂອງພັກ, ຍຸດທະສາດພັດທະນາຊັບພະຍາກອນມະນຸດແຫ່ງຊາດ ຮອດປີ 2025, ກົດໝາຍວ່າດ້ວຍພະນັກງານ-ລັດຖະກອນ ສະບັບເລກທີ 74/ສພຊ, ລົງວັນທີ 18 ທັນວາ 2015, ດຳລັດວ່າດ້ວຍການຝຶກອົບຮົມ ແລະ ພັດທະນາພະນັກງານ-ລັດຖະກອນ ສະບັບເລກທີ 294/ລບ, ລົງວັນທີ 04 ກັນຍາ 2017, ແຜນພັດທະນາອຸດສາຫະກຳປຸງແຕ່ງ ແລະ ການຄ້າ 5 ປີ (2021-2025) ແລະ ແຜນຍຸດທະສາດອື່ນໆ ຂອງຂະແໜງ ອຄ.

### 2. ຄວາມເປັນມາ.

ຂະແໜງອຸດສາຫະກຳ ແລະ ການຄ້າ (ອຄ) ກໍ່ຄືກະຊວງ ອຄ ມີພາລະບົດບາດເປັນເສນາທິການໃຫ້ແກ່ລັດຖະບານໃນການຄຸ້ມຄອງມະຫາພາກ ກ່ຽວກັບວຽກງານອຸດສາຫະກຳປຸງແຕ່ງ ແລະ ຫັດຖະກຳ, ວຽກງານການຄ້າພາຍໃນ ແລະ ຕ່າງປະເທດ, ການຄຸ້ມຄອງຕະຫຼາດ, ການດັດສົມລາຄາ, ການຂຶ້ນທະບຽນ ແລະ ຄຸ້ມຄອງວິສາຫະກິດ, ການຄຸ້ມຄອງ ແລະ ພັດທະນາວິສາຫະກິດຂະໜາດນ້ອຍ ແລະ ກາງ, ການຄຸ້ມຄອງເຂດນິຄົມອຸດສາຫະກຳ ແລະ ການປົກປ້ອງຜູ້ຊົມໃຊ້ໃນ ສປປ ລາວ. ຊຶ່ງກົມຈັດຕັ້ງ ແລະ ພະນັກງານ (ກຈພງ) ມີພາລະບົດບາດເປັນເສນາທິການໃຫ້ແກ່ຄະນະນຳກະຊວງ ກ່ຽວກັບວຽກງານປັບປຸງກົງຈັກການຈັດຕັ້ງ, ວຽກງານຄຸ້ມຄອງ ແລະ ພັດທະນາບຸກຄະລາກອນ, ວຽກງານນະໂຍບາຍຕໍ່ພະນັກງານ-ລັດຖະກອນ ຂອງກະຊວງ ແລະ ສາຍຕັ້ງຢູ່ຂັ້ນທ້ອງຖິ່ນຕາມກົດໝາຍ ແລະ ລະບຽບການກຳນົດໄວ້. ສະນັ້ນ, ກຈພງ ຈຶ່ງເຫັນໄດ້ຄວາມສຳຄັນຂອງການພັດທະນາຊັບພະຍາກອນມະນຸດຂອງຂະແໜງ ອຄ ໂດຍຖືຫຼັກການທີ່ວ່າ: **ວຽກງານຈະພັດທະນາໄດ້ ກໍ່ຕໍ່ເມື່ອບຸກຄະລາກອນໄດ້ຮັບການພັດທະນາ, ອົງກອນຈະພັດທະນາໄດ້ ກໍ່ຕໍ່ເມື່ອຄົນໃນອົງກອນຕ້ອງໄດ້ຮັບການພັດທະນາ.** ດ້ວຍເຫດ ແລະ ຜົນດັ່ງກ່າວ ກຈພງ ຈຶ່ງໄດ້ເອົາໃຈໃສ່ສຶກສາຄົ້ນຄວ້າ ສ້າງກົນໄກການພັດທະນາ ແລະ ຄຸ້ມຄອງພະນັກງານ-ລັດຖະກອນຂອງຕົນ, ແນໃສ່ສ້າງພະນັກງານ-ລັດຖະກອນໃຫ້ມີຄວາມຮູ້, ຄວາມສາມາດ, ຄວາມຊຳນິຊຳນານງານ ແລະ ມີປະສົບການໃນບັນດາຂະແໜງວິຊາການແຕ່ລະຂົງເຂດ ທີ່ເຫັນວ່າໃນໄລຍະຜ່ານມາຍັງອ່ອນນ້ອຍ, ບໍ່ທັນມີຄວາມຮູ້ຄວາມສາມາດເທົ່າທີ່ຄວນ. ສະນັ້ນ, ຈຶ່ງເຫັນໄດ້ຄວາມຈຳ ເປັນທີ່ຕ້ອງໄດ້ສ້າງແຜນຍຸດທະສາດສະບັບນີ້ຂຶ້ນ ແນໃສ່ເປັນທິດທາງລວມຕໍ່ບັນດາຂະແໜງການຂອງຕົນ, ເພື່ອນຳໃຊ້ເປັນບ່ອນອີງໃນການພັດທະນາ ແລະ ຄຸ້ມຄອງພະນັກງານ-ລັດຖະກອນ ໃຫ້ກາຍເປັນຄົນມີຄຸນສົມບັດສົມທຳປະຕິວັດ, ມີຫົວຄິດປະດິດສ້າງ, ມີຄວາມສາມາດ, ມີນ້ຳໃຈມະນຸດສະທຳໃນສັງຄົມ ເພື່ອປະກອບສ່ວນເຂົ້າໃນການພັດທະນາເສດຖະກິດ-ສັງຄົມຂອງຊາດ ໃຫ້ໄດ້ຮັບຄວາມຈະເລີນກ້າວໜ້າ, ປັບປຸງຊີວິດການເປັນຢູ່ ຂອງປະຊາຊົນນັບມື້ນັບດີຂຶ້ນເທື່ອລະກ້າວ ທັງເປັນການສ້າງຕົ້ນທຶນຂອງຊັບພະຍາກອນມະນຸດຂອງຂະແໜງ ອຄ ເພື່ອຫັນເປັນອຸດສາຫະກຳ ແລະ ການຄ້າ ທີ່ທັນສະໄໝເທື່ອລະກ້າວ.

ຜົນການວິເຄາະຄວາມຕ້ອງການບຸກຄະລາກອນ ແລະ ການຕີລາຄາຄວາມຕ້ອງການພັດທະນາບຸກຄະລາກອນ ແມ່ນໄດ້ມາຈາກການດຳເນີນວຽກງານຕົວຈິງ, ຕີລາຄາຄວາມຕ້ອງການ ແລະ ການວາງແຜນພັດທະນາຂີດຄວາມສາມາດ (Capacity Need Assessment and Skill Development Planning) ໄດ້ມາບົນພື້ນຖານການເກັບກຳ, ສັງລວມ ແລະ ວິເຄາະໜ້າວຽກ, ການກຳນົດຄວາມຕ້ອງການບຸກຄະລາກອນ-ທາງດ້ານຈຳນວນ ແລະ ຄຸນວຸດທິ ແລະ ການຕີລາຄາຄວາມຕ້ອງການຝຶກອົບຮົມ ແລະ ການຍົກລະດັບການສຶກສາ ຊຶ່ງອີງຕາມຄວາມຮຽກຮ້ອງຕ້ອງການໃນໜ້າທີ່ວຽກງານ ຂອງຂະແໜງ ອຄ. ບັນດາກົມ, ຫ້ອງການ, ສະຖາບັນ ແລະ ພະ

ແນກ ອຄ ແຂວງ, ນະຄອນຫຼວງ, ທີ່ມີສ່ວນຮ່ວມໃນການວາງແຜນບຸກຄະລາກອນ ແລະ ການຕີລາຄາຄວາມຕ້ອງການພັດທະນາຂີດຄວາມສາມາດຂອງບຸກຄະລາກອນ.

ແບບວິທີການປະຕິບັດ ຫຼື ເຕັກນິກຕ່າງໆ ທີ່ນໍາໃຊ້ສ້າງແຜນຍຸດທະສາດສະບັບນີ້ ລ້ວນແຕ່ໄດ້ຜ່ານການເລືອກເຟັ້ນ ແລະ ທົດສອບການນໍາໃຊ້ແລ້ວ, ມີການດັດປັບ ເພື່ອໃຫ້ແທດເໝາະກັບສະພາບ, ໂຄງປະກອບ ແລະ ພາລະບົດບາດ ແລະ ໜ້າວຽກໃນຂະແໜງ ອຄ ໂດຍລວມ, ໄດ້ນໍາໃຊ້ແບບວິທີຍົກສູງການມີສ່ວນຮ່ວມ (Participatory Approach) ເສີມຂະຫຍາຍທ່າແຮງພາຍໃນ, ບົດຮຽນ ແລະ ປະສົບການທາງດ້ານພັດທະນາບຸກຄະລາກອນຂອງກະຊວງ, ເສີມຂະຫຍາຍຄວາມເປັນເຈົ້າໃນການກໍານົດໜ້າທີ່ ແລະ ລະດັບຄວາມຮັບຜິດຊອບ ໃນວຽກງານທີ່ຕົນເອງໄດ້ຮັບມອບໝາຍ, ພ້ອມນີ້ກໍ່ປະກອບຄໍາເຫັນໃຫ້ເພື່ອນຮ່ວມງານ ກໍານົດຄວາມຕ້ອງການພັດທະນາຕົນເອງ ບົນພື້ນຖານການເຫັນດີ ແລະ ສະໜັບສະໜູນຂອງການຈັດຕັ້ງ ເຄື່ອງມືການຕີລາຄາ ແລະ ວາງແຜນທີ່ມີລັກສະນະກະທັດຮັດ (Simplified HR tools) ຊຶ່ງໄດ້ຮັບການຮັບຮູ້ເຖິງຄວາມອາດສາມາດນໍາໃຊ້ໄດ້ ແລະ ມີການດັດປັບໄດ້ຕາມເງື່ອນໄຂຕົວຈິງ ເຊັ່ນ:

1) ຕາຕະລາງສັງລວມຂໍ້ມູນຂອງພະນັກງານລັດຖະກອນໃນປະຈຸບັນ ຂອງຂະແໜງ ອຄ ປີ 2021.
2) ຕາຕະລາງສັງລວມສະຖິຕິລັດຖະກອນຂອງຂະແໜງ ອຄ ປີ 2021 ແຍກຕາມເກນອາຍຸ.
3) ຕາຕະລາງແຜນຄວາມຕ້ອງການຍົກລະດັບວິຊາສະເພາະຂອງພະນັກງານ ແຕ່ປີ 2021-2025.
4) ຕາຕະລາງແຜນຄວາມຕ້ອງການຝຶກອົບຮົມ (ຝຶກອົບຮົມໄລຍະສັ້ນ, ໄລຍະຍາວ ແຕ່ປີ 2021-2025 ພາຍໃນ ແລະ ຕ່າງປະເທດ.
5) ຕາຕະລາງແຜນຮັບນັກຮຽນຂອງວິທະຍາໄລການຄ້າ ປີ 2021-2025.
6) ຕາຕະລາງແຜນການຮັບອຸດໜູນບໍານານ ແຕ່ປີ 2021-2025.

**3. ຈຸດປະສົງ.**

1) ເພື່ອກໍ່ສ້າງ ແລະ ບໍາລຸງພະນັກງານ-ລັດຖະກອນທາງດ້ານການເມືອງແນວຄິດ;
2) ເພື່ອກໍ່ສ້າງ ແລະ ບໍາລຸງພະນັກງານ-ລັດຖະກອນ ທາງດ້ານວິຊາສະເພາະ;
3) ເພື່ອປັບປຸງຄຸນນະພາບທາງດ້ານການຈັດຕັ້ງໃຫ້ມີຄວາມເຂັ້ມແຂງ;
4) ເພື່ອປັບປຸງຄຸນນະພາບພະນັກງານ-ລັດຖະກອນໃຫ້ມີປະສິດທິພາບ ແລະ ປະສິດທິຜົນ;
5) ເພື່ອປະຕິບັດນະໂຍບາຍຕໍ່ພະນັກງານ-ລັດຖະກອນ;
6) ເພື່ອສ້າງຊັບພະຍາກອນມະນຸດຂອງຂະແໜງ ອຄ ໃຫ້ມີຄວາມຮູ້, ຄວາມສາມາດທາງດ້ານການນໍາໃຊ້ເຕັກໂນໂລຊີດີຈິຕອນ ແລະ ICT ເຂົ້າໃນການພັດທະນາວຽກງານອຸດສາຫະກໍາ ແລະ ການຄ້າ ເພື່ອຫັນເປັນທັນສະໄໝເທື່ອລະກ້າວ;

## II. ສະພາບການພັດທະນາ ແລະ ຄຸ້ມຄອງພະນັກງານ-ລັດຖະກອນໃນໄລຍະຜ່ານມາ (2016-2021).

**1. ສະພາບພະນັກງານ.**

ປະຈຸບັນ (09/2021) ທົ່ວຂະແໜງ ອຄ ມີພະນັກງານ-ລັດຖະກອນທັງໝົດ 2,980 ຄົນ, ຍິງ 940 ຄົນ, ໃນນີ້ສັງກັດຢູ່ກະຊວງ ອຄ 654 ຄົນ, ຍິງ 266 ຄົນ, ກວມເອົາ 21,94%, ສັງກັດຢູ່ຂັ້ນທ້ອງຖິ່ນ 2.326 ຄົນ, ຍິງ 674 ຄົນ, ກວມເອົາ 78,05%; ສັງກັດພະແນກ ອຄ ແຂວງ 1.075 ຄົນ, ຍິງ 334 ຄົນ, ກວມເອົາ 36,07% ແລະ ສັງກັດຢູ່ຫ້ອງການ ອຄ ເມືອງ 1.251 ຄົນ, ຍິງ 340 ຄົນ, ກວມເອົາ 41,97%.

ລະດັບປະລິນຍາເອກ ມີ 25 ຄົນ, ຍິງ 02 ຄົນ, ກວມເອົາ 0,83%; ລະດັບປະລິນຍາໂທ ມີ 466 ຄົນ, ຍິງ 134 ຄົນ, ກວມເອົາ 15,63%; ລະດັບເໜືອປະລິນຍາຕີ 01 ຄົນ, ຍິງ 0 ຄົນ ກວມເອົາ 0,03%; ລະດັບປະລິນຍາຕີ 1.741 ຄົນ, ຍິງ 544 ຄົນ ກວມເອົາ 58,42%, ລະດັບຊັ້ນສູງ 626 ຄົນ, ຍິງ 237 ຄົນ, ກວມເອົາ

21%; ລະດັບ ຊັ້ນກາງ 100 ຄົນ, ຍິງ 18 ຄົນ, ກວມເອົາ 3,35%; ລະດັບຊັ້ນຕົ້ນ 18 ຄົນ, ຍິງ 05 ຄົນ, ກວມເອົາ 0,60%; ບໍ່ມີລະດັບວິຊາສະເພາະ 01 ຄົນ, ຍິງ 0 ຄົນ, ກວມເອົາ 0,03%.

ວິຊາສະເພາະຂອງພະນັກງານ-ລັດຖະກອນທີ່ມີຢູ່ປະຈຸບັນທົ່ວຂະແໜງ ອຄ ແມ່ນນອນໃນຂົງເຂດວິຊາເສດຖະສາດ, ບໍລິຫານທຸລະກິດ ແລະ ກົດໝາຍ ເປັນສ່ວນຫຼາຍ ຫຼື ເປັນອັນດັບໜຶ່ງ; ຮອງລົງມາ ແມ່ນຂົງເຂດກະສິກໍາ; ຂົງເຂດວິທະຍາສາດທໍາມະຊາດ ແລະ ສິ່ງແວດລ້ອມ ແລະ ຂົງເຂດວິສະວະກໍາ, ການຜະລິດ ແລະກໍ່ສ້າງ ຕາມລໍາດັບ ສໍາລັບຂົງເຂດທີ່ພະນັກງານຂະແໜງ ອຄ ກວມເອົາເປີເຊັນຫຼາຍທັງຂັ້ນສູນກາງ ແລະ ຂັ້ນທ້ອງຖິ່ນ ຄື ຂົງເຂດເສດຖະສາດ, ບໍລິຫານທຸລະກິດ ແລະ ກົດໝາຍ ໃນນັ້ນພະນັກງານສູນກາງກວມ ຈໍານວນ 453 ຄົນ ກວມເອົາ 69,27%, ພະນັກງານຂັ້ນແຂວງ ຈໍານວນ 779 ຄົນ ກວມເອົາ 83,04% ແລະພະນັກງານຂັ້ນເມືອງ ຈໍານວນ 1.065 ຄົນ, ກວມເອົາ 85,40 %.

ສໍາລັບຂັ້ນສູນກາງ ຂົງເຂດວິຊາຮຽນຮອງລົງມາ ຈາກຂົງເຂດບໍລິຫານ ແມ່ນຂົງເຂດວິສາວະກໍາ, ການຜະລິດ ແລະ ການກໍ່ສ້າງ ມີພະນັກງານຈໍານວນ 69 ຄົນ ກວມເອົາ 10,55% ຂອງພະນັກງານຂັ້ນສູນກາງທັງໝົດສໍາລັບຂັ້ນ ພະແນກ ອຄ ແຂວງ ຂົງເຂດ ວິທະຍາສາດທໍາມະຊາດ ແລະ ສິ່ງແວດລ້ອມ ແມ່ນຂົງເຂດວິຊາຮຽນອັນດັບສອງ ເຊິ່ງມີພະນັກງານຈໍານວນ 36 ຄົນ ກວມເອົາ 3,83% ຂອງພະນັກງານພະແນກ ອຄ ແຂວງທັງໝົດ. ສ່ວນພະນັກງານຂັ້ນຫ້ອງການ ອຄ ເມືອງ ຂົງເຂດວິຊາອັນດັບສອງແມ່ນ ກະສິກໍາ ມີພະນັກງານຈໍານວນ 40 ຄົນ ກວມເອົາ 3,21% ຂອງພະນັກງານ ອຄ ເມືອງທັງໝົດ.

ທຽບໃສ່ 5 ປີ ຜ່ານມາ, ຈໍານວນພະນັກງານ-ລັດຖະກອນທົ່ວຂະແໜງ ອຄ ເພີ່ມຂຶ້ນ 281 ທ່ານ ຫຼື ເພີ່ມຂຶ້ນ 10,41%. ການບັນຈຸສັບຊ້ອນພະນັກງານເຂົ້າຕໍາແໜ່ງບໍລິຫານຢູ່ຂັ້ນກະຊວງມີອັດຕາສ່ວນ 48,62% ຂອງພະນັກງານທັງໝົດຂັ້ນກະຊວງ, ຢູ່ຂັ້ນແຂວງມີອັດຕາສ່ວນ 45,95% ຂອງພະນັກງານທັງໝົດຂັ້ນແຂວງ ແລະ ຢູ່ຂັ້ນເມືອງ 61,19% ຂອງພະນັກງານທັງໝົດຂັ້ນເມືອງ.

**2. ສະພາບໂຄງປະກອບກົງຈັກຂອງຂະແໜງ ອຄ.**

ໂຄງປະກອບກົງຈັກຂອງກະຊວງ ອຄ ມີ 14 ກົມ; (ລວມທັງຫ້ອງການກະຊວງ ແລະ ສະຖາບັນ, ໃນນັ້ນມີ 69 ພະແນກທີ່ຂຶ້ນກັບກົມ) ຄື: 1. ຫ້ອງການກະຊວງ, 2. ກົມຈັດຕັ້ງ ແລະ ພະນັກງານ, 3. ກົມກວດກາ, 4. ກົມແຜນການ ແລະ ການຮ່ວມມື, 5. ກົມອຸດສາຫະກໍາ ແລະ ຫັດຖະກໍາ, 6. ກົມການຄ້າພາຍໃນ, 7. ກົມທະບຽນ ແລະ ຄຸ້ມຄອງວິສາຫະກິດ, 8. ກົມນະໂຍບາຍການຄ້າຕ່າງປະເທດ, 9. ກົມການນໍາເຂົ້າ ແລະ ສົ່ງອອກ, 10. ກົມສົ່ງເສີມການຄ້າ. 11. ກົມສົ່ງເສີມວິສາຫະກິດຂະໜາດນ້ອຍ ແລະ ກາງ, 12. ກົມຊັບສິນທາງປັນຍາ; 13. ກົມມາດຕະຖານ ແລະ ວັດແທກ, 14.ສະຖາບັນອຸດສາຫະກໍາ ແລະ ການຄ້າ (ລວມທັງວິທະຍາໄລການຄ້າ);

ໂຄງປະກອບກົງຈັກການຈັດຕັ້ງ ພະແນກ ອຄ ຢູ່ຂັ້ນແຂວງ ປະກອບມີ 17 ແຂວງ ແລະ ນະຄອນຫຼວງວຽງຈັນ (ແຕ່ລະພະແນກ ອຄ ແຂວງ ປະກອບມີ 09 ຂະແໜງ), ແລະ ມີ ຫ້ອງການ ອຄ ຢູ່ຂັ້ນເມືອງ 147 ເມືອງໃນຂອບເຂດທົ່ວປະເທດ (ແຕ່ລະຫ້ອງການ ອຄ ເມືອງປະກອບມີ 05 ໜ່ວຍງານ) ການຄຸ້ມຄອງພະນັກງານ-ລັດຖະກອນ ຂອງຂະແໜງ ອຄ ແມ່ນໄດ້ປະຕິບັດຕາມຫຼັກການລວມສູນແຕ່ຂັ້ນສູນກາງຮອດທ້ອງຖິ່ນ ແລະ ປະຕິບັດເຂັ້ມງວດຕາມກົດໝາຍວ່າດ້ວຍພະນັກງານ-ລັດຖະກອນ ໂດຍລວມແລ້ວພວກເຮົາໄດ້ຫັນການຄຸ້ມຄອງເຂົ້າສູ່ລະບົບທັນສະໄໝເທື່ອລະກ້າວ ເປັນຕົ້ນການຄຸ້ມຄອງດ້ານຈໍານວນພົນ, ດ້ານຊີວະປະຫວັດການເຄື່ອນໄຫວຕ່າງໆຂອງລັດຖະກອນໂດຍໄດ້ນໍາໃຊ້ລະບົບຄຸ້ມຄອງຂໍ້ມູນລັດຖະກອນ Personnel

Information Management System (PIMS) ທີ່ເຊື່ອມຕໍ່ກັບກະຊວງພາຍໃນ. ໃນປະຈຸບັນລະບົບດັ່ງກ່າວນໍາໃຊ້ໃນລັກສະນະການປ້ອນຂໍ້ມູນຜ່ານຈໍານວນພົນທີ່ຈະຮັບເງິນເດືອນ ໃນແຕ່ລະງວດຢ່າງເປັນປົກກະຕິ.

### 3. ຜົນສໍາເລັດ ແລະ ຂໍ້ຄົງຄ້າງ.

ວຽກງານການພັດທະນາ ແລະ ຄຸ້ມຄອງພະນັກງານ-ລັດຖະກອນ ຂອງຂະແໜງ ອຄ ໄດ້ຈັດຕັ້ງປະຕິບັດຕາມພາລະບົດບາດ ແລະ ໄດ້ພັດທະນາເປັນແຕ່ລະໄລຍະຕາມສະພາບການຂະຫຍາຍຕົວຂອງເສດຖະກິດ-ສັງຄົມຂອງພາກພື້ນ ແລະ ສາກົນ ພາຍໃຕ້ການຊີ້ນໍາໆພາຂອງຄະນະນໍາກະຊວງ ອຄ. ຄຽງຄູ່ກັບຜົນສໍາເລັດທີ່ຍາດມາໄດ້ດັ່ງກ່າວຂ້າງເທິງ ແຕ່ກໍ່ຍັງມີຂໍ້ຄົງຄ້າງໃນໄລຍະຜ່ານມາ ດັ່ງລຸ່ມນີ້:

### 3.1 ການກໍ່ສ້າງ ແລະ ບໍາລຸງພະນັກງານ-ລັດຖະກອນ ທາງດ້ານການເມືອງ-ແນວຄິດ.

#### 3.1.1 ຜົນສໍາເລັດ.

ຂະແໜງ ອຄ ໄດ້ເອົາໃຈໃສ່ສຶກສາອົບຮົມການເມືອງແນວຄິດໃຫ້ແກ່ພະນັກງານ-ລັດຖະກອນ ແຕ່ຂັ້ນສູນກາງຮອດທ້ອງຖິ່ນ, ທີ່ຢູ່ພາຍໃຕ້ການຄຸ້ມຄອງຂອງກະຊວງ ອຄ ເພື່ອໃຫ້ກໍາແໜ້ນ ແລະ ເຊື່ອມຊຶມແນວທາງນະໂຍບາຍ, ບັນດາມະຕິ, ຄໍາສັ່ງ, ກົດໝາຍ ແລະ ລະບຽບການຕ່າງໆ ຂອງພັກ ແລະ ລັດ ທີ່ໄດ້ວາງອອກແຕ່ລະໄລຍະ, ການສຶກສາອົບຮົມດ້ານການເມືອງ-ແນວຄິດດັ່ງກ່າວ, ໄດ້ດໍາເນີນດ້ວຍຫຼາຍຮູບການ ເຊັ່ນ: ເຜີຍແຜ່ເຊື່ອມຊຶມ, ຈັດຕັ້ງປາຖະກະຖາ, ເລົ່າມູນເຊື້ອເນື່ອງໃນໂອກາດວັນສໍາຄັນຕ່າງໆ ຂອງພັກ ແລະ ຂອງຊາດ, ການຮຽນທິດສະດີການເມືອງ-ການປົກຄອງທັງພາຍໃນ ແລະ ຕ່າງປະເທດ ເພື່ອແນໃສ່ເຮັດໃຫ້ບຸຄະລາກອນຂອງແໜງ ອຄ ໃຫ້ມີທັດສະນະແນວຄິດການເມືອງໜັກແໜ້ນ, ເຂົ້າໃຈຕໍ່ແນວທາງນະໂຍບາຍຂອງພັກ ແລະ ລະບຽບກົດໝາຍຂອງລັດຢ່າງທົ່ວເຖິງ, ເຊື່ອໝັ້ນຕໍ່ການນໍາພາຂອງພັກ-ລັດ, ມີສະຕິຕໍ່ການຈັດຕັ້ງ, ມີຄວາມຮັບຜິດຊອບສູງຕໍ່ໜ້າທີ່, ມີຄວາມສາມັກຄີກວ້າງຂວາງ, ຍົກສູງບົດບາດເພດຍິງ, ຊົນເຜົ່າ ແລະ ທັນເປັນໝຸ່ມ. ພ້ອມນັ້ນ, ຄະນະນໍາກະຊວງໄດ້ຖືສໍາຄັນຕໍ່ວຽກງານຍົກລະດັບດ້ານທິດສະດີການເມືອງ-ການປົກຄອງ ໂດຍໄດ້ຈັດຕັ້ງບໍາລຸງທິດສະດີການເມືອງ-ການປົກຄອງ ໄລຍະສັ້ນໃຫ້ສະມາຊິກພັກ ແລະ ພະນັກງານຫຼັກແຫຼ່ງຂອງຂະແໜງ ອຄ ຂັ້ນສູນກາງ ໄດ້ 5 ຊຸດ, ຊຶ່ງມີຜູ້ເຂົ້າຮ່ວມບໍາລຸງຈໍານວນ 171 ສະຫາຍ (ຍິງ 57 ສະຫາຍ); ນອກຈາກນີ້ ໄດ້ນໍາສົ່ງພະນັກງານໄປຍົກລະດັບສາຍການເມືອງ-ການປົກຄອງ ປ.ໂທ 01 ສະຫາຍ, ປ.ຕີ 02 ສະຫາຍ (02 ສະຫາຍ), ໄດ້ນໍາສົ່ງພະນັກງານນໍາພາ-ຄຸ້ມຄອງຂັ້ນຫົວໜ້າກົມໄປຮຽນວຽກງານປ້ອງກັນຊາດປ້ອງກັນຄວາມສະຫງົບ ຈໍານວນ 03 ສະຫາຍ ແລະ ສົ່ງພະນັກງານນໍາພາ-ຄຸ້ມຄອງຂັ້ນຮອງກົມ ໄປຍົກລະດັບທິດສະດີການເມືອງ-ການປົກຄອງ ຢູ່ພາຍໃນ ແລະ ຕ່າງປະເທດ ຈໍານວນ 09 ສະຫາຍ (ຍິງ 06 ສະຫາຍ).

#### 3.1.2 ຂໍ້ຄົງຄ້າງ.

ບຸກຄະລາກອນຂອງຂະແໜງ ອຄ ຈໍານວນໜຶ່ງຍັງບໍ່ທັນເຊື່ອມຊຶມຢ່າງເລິກເຊິ່ງຕໍ່ແນວທາງຂອງພັກ-ລັດທີ່ໄດ້ວາງອອກແຕ່ລະໄລຍະ, ຍັງບໍ່ທັນໄດ້ເອົາໃຈໃສ່ສະແຫວງຫາ ສຶກສາຄົ້ນຄວ້າທາງດ້ານວິຊາການ, ການວິເຄາະວິໄຈບັນຫາຍັງບໍ່ທັນເລິກເຊິ່ງ, ຍັງບໍ່ທັນເອົາໃຈໃສ່ຕໍ່ໜ້າທີ່ວຽກງານທີ່ໄດ້ຮັບມອບໝາຍເທົ່າທີ່ຄວນ, ສະຕິຕໍ່ການຈັດຕັ້ງຍັງບໍ່ທັນສູງເທົ່າທີ່ຄວນ ເຫັນໄດ້ຈາກການປະຕິບັດຄໍາສັ່ງເລກທີ 15/ນຍ, ລົງວັນທີ 13 ພຶດສາພາ 2016 ວ່າດ້ວຍການເພີ່ມທະວີຄວາມເຂັ້ມງວດໃນການຄຸ້ມຄອງ ແລະ ກວດກາການຂຸດຄົ້ນໄມ້, ເຄື່ອນຍ້າຍໄມ້ ແລະ ທຸລະກິດໄມ້ ເຫັນວ່າ ພະນັກງານຂະແໜງ ອຄ ໄດ້ຖືກປະຕິບັດວິໄນຫຼາຍຄົນພໍສົມຄວນໃນຂອບເຂດທົ່ວປະເທດ ຍັງບໍ່ທັນຂຸດຄົ້ນເອົາຄວາມຮູ້ຄວາມສາມາດທີ່ບົ່ມຊ້ອນ ທີ່ຕົນເອງມີໝູນໃຊ້ເຂົ້າໃນວຽກງານທີ່ໄດ້ຮັບມອບໝາຍເທົ່າທີ່ຄວນ. ນອກຈາກນັ້ນ, ພະນັກງານຈໍານວນຫຼາຍຍັງບໍ່ທັນເອົາໃຈໃສ່ໃນການພັດທະນາຕົນເອງ ເປັນຕົ້ນແມ່ນການຍົກລະດັບຄວາມຮູ້ທາງດ້ານວິຊາການ ແລະ ທາງດ້ານຄວາມຮູ້ຄວາມສາມາດ.

### 3.2 ການກໍ່ສ້າງ ແລະ ບໍາລຸງພະນັກງານ-ລັດຖະກອນ ທາງດ້ານວິຊາສະເພາະ.

#### 3.2.1 ຜົນສໍາເລັດ.

ຂະແໜງ ອຄ ເຫັນໄດ້ຄວາມສຳຄັນຕໍ່ກັບການພັດທະນາຊັບພະຍາກອນມະນຸດຂອງຂະແໜງການຕົນ ເພື່ອໃຫ້ສາມາດເຊື່ອມໂຍງເຂົ້າກັບພາກພື້ນ ແລະ ສາກົນ ຕາມກົນໄກການຂະຫຍາຍຕົວຂອງເສດຖະກິດ-ສັງຄົມ ຕາມແຕ່ລະໄລຍະ ຊຶ່ງສາມາດຍາດມາໄດ້ໃນ 5 ປີຜ່ານມາ ຄື: ໄດ້ສົ່ງພະນັກງານໄປຍົກລະດັບດ້ານວິຊາສະເພາະຢູ່ພາຍໃນ ແລະ ຕ່າງປະເທດ ທັງໝົດ 69 ທ່ານ (ຍິງ 21 ທ່ານ); ລະດັບປະລິນຍາເອກ 12 ທ່ານ (ຍິງ 03 ທ່ານ), ປະລິນຍາໂທ 205 ທ່ານ (ຍິງ 51 ທ່ານ), ເໜືອປະລິນຍາຕີ 01 ທ່ານ, ປະລິນຍາຕີ 262 ທ່ານ (ຍິງ 84 ທ່ານ). ໄດ້ສົ່ງພະນັກງານ-ລັດຖະກອນ ທົ່ວຂະແໜງອຸດສາຫະກຳ ແລະ ການຄ້າ ເຂົ້າຮ່ວມຝຶກອົບຮົມ, ທັດສະນະສຶກສາ ຖອດຖອນບົດຮຽນ, ໄປຍົກລະດັບພາສາອັງກິດ ທັງພາຍໃນ ແລະ ຕ່າງປະເທດ ທັງໝົດ 5.578 ທ່ານ (ຍິງ 487 ທ່ານ) ພ້ອມນັ້ນ, ຄະນະນຳກະຊວງໄດ້ຖືສຳຄັນຕໍ່ວຽກງານຍົກລະດັບດ້ານທິດສະດີການເມືອງ-ການປົກຄອງ ໂດຍໄດ້ຈັດຕັ້ງບຳລຸງທິດສະດີການເມືອງ-ການປົກຄອງ ໄລຍະສັ້ນໃຫ້ສະມາຊິກພັກ ແລະ ພະນັກງານຫຼັກແຫຼ່ງ ຂອງຂະແໜງ ອຄ ຂັ້ນສູນກາງ ໄດ້ 5 ຊຸດ, ຊຶ່ງມີຜູ້ເຂົ້າຮ່ວມບຳລຸງຈຳນວນ 171 ສະຫາຍ (ຍິງ 57 ສະຫາຍ); ນອກຈາກນີ້, ໄດ້ນຳສົ່ງພະນັກງານໄປຍົກລະດັບສາຍການເມືອງ-ການປົກຄອງ ປ.ໂທ 01 ສະຫາຍ, ປ.ຕີ 02 ສະຫາຍ, ໄດ້ນຳສົ່ງພະນັກງານນຳພາ-ຄຸ້ມຄອງຂັ້ນຫົວໜ້າກົມໄປຮຽນວຽກງານປ້ອງກັນຊາດປ້ອງກັນຄວາມສະຫງົບ ຈຳນວນ 03 ສະຫາຍ ແລະ ສົ່ງພະນັກງານນຳພາ-ຄຸ້ມຄອງຂັ້ນຮອງກົມ ໄປຍົກລະດັບທິດສະດີການເມືອງ-ການປົກຄອງຢູ່ພາຍໃນ ແລະ ຕ່າງປະເທດ ຈຳນວນ 09 ສະຫາຍ (ຍິງ 06 ສະຫາຍ).

**3.2.2 ຂໍ້ຄົງຄ້າງ.**

ເຖິງແມ່ນວ່າ ຂະແໜງ ອຄ ໄດ້ມີແຜນກຳນົດກໍ່ສ້າງ-ບຳລຸງພະນັກງານ ແຕ່ການຈັດຕັ້ງປະຕິບັດບໍ່ທັນຕິດພັນກັບແຜນດັ່ງກ່າວ ແລະ ຄວາມຮຽກຮ້ອງຕ້ອງການຂອງວຽກງານຕົວຈິງ, ຂາດການຕິດຕາມປະເມີນຜົນບຸກຄະລາກອນທີ່ນອນໃນແຜນກຳນົດພະນັກງານ, ການບຳລຸງສ້າງພະນັກງານບໍ່ທັນເປັນລະບົບຄົບຊຸດ ບໍ່ທັນມີກົນໄກການເລືອກເຟັ້ນ, ການຄັດຈ້ອນເອົາພະນັກງານໄປກໍ່ສ້າງ ບໍ່ທັນຮັບປະກັນຕໍ່ມາດຖານເງື່ອນໄຂ ແລະ ຄວາມຮຽກຮ້ອງຕ້ອງການຂອງວຽກງານ, ສຳລັບການກໍ່ສ້າງພະນັກງານສາຍຕັ້ງຂອງກະຊວງຢູ່ຂັ້ນທ້ອງຖິ່ນ ຍັງຂາດການປະສານສົມທົບ ລະຫວ່າງ ກະຊວງ ກັບສາຍຂວາງ ຈຶ່ງເຮັດໃຫ້ການກໍ່ສ້າງພະນັກງານບໍ່ໄປຕາມແຜນກຳນົດ.

**3.3 ປັບປຸງຄຸນນະພາບທາງດ້ານການຈັດຕັ້ງໃຫ້ມີຄວາມເຂັ້ມແຂງ.**

**3.3.1 ຜົນສຳເລັດ.**

ຄະນະນຳກະຊວງ ອຄ ໄດ້ເອົາໃຈໃສ່ ແລະ ຖືສຳຄັນຕໍ່ວຽກງານປັບປຸງກົງຈັກການຈັດຕັ້ງ ເພາະມັນເປັນຕົວວັດຜົນສຳເລັດຂອງການປະຕິບັດແນວທາງນະໂຍບາຍ, ມະຕິ ແລະ ຄຳສັ່ງ ຂອງພັກ-ລັດ ໄລຍະຜ່ານມາໄດ້ຄົ້ນຄວ້າປັບປຸງພາລະບົດບາດຂອງກະຊວງ ແລະ ຂອງບັນດາກົມໃຫ້ແທດເໝາະກັບການຂະຫຍາຍຕົວຂອງວຽກງານ.

ໂຄງປະກອບດ້ານກົງຈັກຂອງຂະແໜງ ອຄ ແຕ່ຂັ້ນສູນກາງຮອດທ້ອງຖິ່ນ ຄື: ຂັ້ນກະຊວງ ປະກອບມີ 1 ຫ້ອງການ, 12 ກົມ ແລະ 1 ສະຖາບັນ; ຂັ້ນແຂວງປະກອບມີ 09 ຂະແໜງ; ຂັ້ນເມືອງປະກອບມີ 05 ໜ່ວຍງານ ຕາມທິດກົງຈັກການຈັດຕັ້ງກະທັດຮັດ, ເບົາບາງ ແລະ ໜັກແໜ້ນ;

ການປັບປຸງດ້ານບຸກຄະລາກອນ ການແຕ່ງຕັ້ງລັດຖະກອນດຳລົງຕຳແໜ່ງບໍລິຫານ ແຕ່ຂັ້ນສູນກາງ ຮອດທ້ອງຖິ່ນ ປະຈຸບັນບຸກຄະລາກອນທີ່ດຳລົງຕຳແໜ່ງບໍລິຫານຢູ່ຂັ້ນກະຊວງ ມີອັດຕາສ່ວນ 50.75% ຂອງພະນັກງານທັງໝົດ, ຢູ່ຂັ້ນແຂວງມີອັດຕາສ່ວນ 45.85% ຂອງລັດຖະກອນທັງໝົດ ແລະ ຢູ່ຂັ້ນເມືອງ ມີອັດຕາສ່ວນ 55.53% ຂອງພະນັກງານທັງໝົດ.

**3.3.2 ຂໍ້ຄົງຄ້າງ.**

ຂະແໜງ ອຄ ໄດ້ເອົາໃຈໃສ່ໃນການປັບປຸງກົງຈັກການຈັດຕັ້ງແຕ່ລະຂັ້ນຢ່າງຕໍ່ເນື່ອງ ແຕ່ຍັງມີບາງຂົງເຂດວຽກງານການກຳນົດພາລະບົດບາດ, ໜ້າທີ່ຄວາມຮັບຜິດຊອບ ບໍ່ທັນຈະແຈ້ງ, ຮັດກຸມ, ການປັບປຸງບັນດານິຕິກຳ, ລະບຽບການ, ກົນໄກໃນການຄຸ້ມຄອງມະຫາພາກຂອງກະຊວງ ຍັງມີຫຼາຍອັນບໍ່ທັນຈະແຈ້ງ ການປະສານງານລະຫວ່າງພາກສ່ວນຕ່າງໆ ພາຍໃນກະຊວງ, ຂັ້ນສູນກາງ ແລະ ທ້ອງຖິ່ນ ໃນການເກັບກຳຂໍ້ມູນຍັງຊັກຊ້າ, ການມອບວຽກໃຫ້ທ້ອງຖິ່ນ ເຖິງແມ່ນວ່າປະຕິບັດໄປຕາມທິດ 3 ສ້າງ ແຕ່ບາງວຽກງານປະສິດທິພາບຍັງບໍ່ທັນສູງ ເຮັດໃຫ້ມີຊ່ອງວ່າງໃນການຈັດຕັ້ງປະຕິບັດ ແລະ ມີຫາງສຽງຈົ່ມວ່າຈາກສັງຄົມ ການຈັດວາງສັບຊ້ອນສະມາຊິກພັກ, ພະນັກງານ, ເພື່ອໃຫ້ສອດຄ່ອງຕາມທິດທັນເປັນຊ່ຽວຊານ ແລະ ມືອາຊີບ ຍັງບໍ່ທັນເປັນລະບົບ ແລະ ມີປະສິດທິຜົນສູງ.

### 3.4 ການປັບປຸງຄຸນນະພາບພະນັກງານ-ລັດຖະກອນໃຫ້ມີປະສິດທິພາບ ແລະ ປະສິດທິຜົນ.

#### 3.4.1 ຜົນສຳເລັດ.

ການປະຕິບັດການປະເມີນຜົນຂອງພະນັກງານ-ລັດຖະກອນ ໄດ້ປະຕິບັດຕາມກົດໝາຍ, ດຳລັດ ແລະ ລະບຽບການຕ່າງໆຂອງລັດທີ່ໄດ້ກຳນົດໄວ້, ໂດຍສະເພາະ ກົດໝາຍວ່າດ້ວຍພະນັກງານ-ລັດຖະກອນ ແລະ ດຳລັດ ວ່າດ້ວຍການປະເມີນຜົນການປະຕິບັດວຽກງານ ຂອງພະນັກງານ-ລັດຖະກອນ ສຳລັບກະຊວງ ອຄ ປີ 2016 ມີພະນັກງານປະເມີນທັງໝົດ 430 ຄົນ, ດີຫຼາຍ 192 ຄົນ ກວມເອົາ 44%, ດີ 228 ຄົນ, ກວມເອົາ 53%, ກາງ 10 ຄົນ, ກວມເອົາ 2%. ປີ 2017 ມີພະນັກງານປະເມີນທັງໝົດ 445 ຄົນ, ດີຫຼາຍ 258 ຄົນ, ກວມເອົາ 57%, ດີ 178 ຄົນ, ກວມເອົາ 40%, ກາງ 09 ຄົນ, ກວມເອົາ 20%. ປີ 2018 ມີພະນັກງານປະເມີນທັງໝົດ 436 ຄົນ, ດີຫຼາຍ 223 ຄົນ, ກວມເອົາ 51%, ດີ198 ຄົນ, ກວມເອົາ 45%, ກາງ 13 ຄົນ, ກວມເອົາ 2 %, ອ່ອນ 02 ຄົນ, ກວມເອົາ 0,45%. ປີ 2019 ມີພະນັກງານປະເມີນທັງໝົດ 434 ຄົນ, ດີຫຼາຍ 311 ຄົນ, ກວມເອົາ 71%, ດີ 120 ຄົນ, ກວມເອົາ 27%, ກາງ03 ຄົນ, ກວມເອົາ 0,69%.

#### 3.4.2 ຂໍ້ຄົງຄ້າງ.

ຍ້ອນຄວາມເຂົ້າໃຈຂອງພະນັກງານ-ລັດຖະກອນ ບາງກົມບໍ່ທັນເຂົ້າໃຈເລິກເຊິ່ງ, ຍັງຖືເບົາໃນການປະເມີນຜົນ ສະແດງອອກໃນການໃຫ້ຄະແນນບໍ່ຖືກຄວາມເປັນຈິງ ຍັງມີລັກສະນະສະເລ່ຍຕາມຕຳແໜ່ງ, ສ່ວນຫຼາຍແມ່ນໃຫ້ແບບນະໂຍບາຍເອົາໃຈກັນ ໂດຍບໍ່ເອົາຜົນງານມາວັດແທກໃນການໃຫ້ຄະແນນ.

### 3.5 ການປະຕິບັດນະໂຍບາຍຕໍ່ພະນັກງານ-ລັດຖະກອນ.

#### 3.5.1 ຜົນສຳເລັດ.

- ປະຕິບັດນະໂຍບາຍຜ່ານຈຳນວນພົນເງິນເດືອນ ແລະ ເລື່ອນຊັ້ນ-ຂັ້ນເງິນເດືອນປົກກະຕິ, ດັດແກ້ຊັ້ນ-ຂັ້ນເງິນເດືອນຕາມໃບປະກາສະນີຍະບັດ ແລະ ອາຍຸການ (ພື້ນຊັ້ນ) ປະຈຳແຕ່ລະງວດຖືກຕ້ອງ ແລະ ທັນເວລາ ໃຫ້ພະນັກງານ-ລັດຖະກອນ ຕາມລະບຽບການກຳນົດ.
- ປະຕິບັດນະໂຍບາຍອຸດໜູນບຳເນັດ, ເສຍອົງຄະ, ເສຍກຳລັງແຮງງານ, ອຸດໜູນບຳນານ, ອຸດໜູນລູກເມຍພະນັກງານ, ປິ່ນປົວສຸຂະພາບ ແລະ ເສຍຊີວິດຂອງພະນັກງານ-ລັດຖະກອນ ແລະ ພະນັກງານບຳນານຕາມທີ່ໄດ້ກຳນົດໄວ້ໃນກົດໝາຍປະກັນສັງຄົມ.
- ປະຕິບັດນະໂຍບາຍລາພັກປິ່ນປົວສຸຂະພາບ, ລາພັກຕິດຕາມເມຍ, ຜົວ ໄປປະຈຳການ ຫຼື ຮຽນຢູ່ຕ່າງປະເທດ ຕາມທີ່ໄດ້ກຳນົດໄວ້ໃນກົດໝາຍ ແລະ ລະບຽບການ.
- ປະຕິບັດນະໂຍບາຍຍ້ອງຍໍບຸກຄົນ ແລະ ກົມກອງລວມໝູ່ ທັງພາຍໃນ ແລະ ຕ່າງປະເທດ ໃຫ້ຖືກຕ້ອງຕາມລະບຽບການ ແລະ ທັນເວລາ.
- ຄົ້ນຄວ້ານຳສະເໜີຂັ້ນເທິງພິຈາລະນາທັນສິດນຳໃຊ້ທີ່ດິນ, ເຮືອນ, ພາຫະນະ ແລະ ອື່ນໆ ໃຫ້ພະນັກງານ-ລັດຖະກອນ ແລະ ພະນັກງານບຳນານ.

- ຄົ້ນຄວ້ານຳສະເໜີພາກສ່ວນກ່ຽວຂ້ອງ ໃນການປະຕິບັດນະໂຍບາຍເງິນສົມທົບປຸກສ້າງສ້ອມແປງທີ່ຢູ່ອາໄສໃຫ້ພະນັກງານ-ລັດຖະກອນ ແລະ ພະນັກງານບຳນານ ແລະ ນະໂຍບາຍອື່ນໆ ຕາມລະບຽບການ.

**3.5.2 ຂໍ້ຄົງຄ້າງ.**

- ການປະຕິບັດນະໂຍບາຍຍ້ອງຍໍຕໍ່ພະນັກງານ-ລັດຖະກອນຍັງບໍ່ທັນໄດ້ເຮັດເປັນປົກກະຕິ ແລະ ຕໍ່ເນື່ອງ, ບໍ່ທັນມີແຜນການສ້າງຂະບວນການແຂ່ງຂັນຮັກຊາດ ແລະ ພັດທະນາຂອງຂະແໜງການ, ການເກັບກຳຜົນງານທີ່ພົ້ນເດັ່ນ ຂອງພະນັກງານ-ລັດຖະກອນຍັງເຮັດບໍ່ທັນໄດ້ດີເທົ່າທີ່ຄວນ.
- ການປະຕິບັດນະໂຍບາຍໃນດ້ານຕ່າງໆ ຕໍ່ພະນັກງານ-ລັດຖະກອນ ແລະ ພະນັກງານບຳນານ ຍັງບໍ່ທັນເປັນເອກະພາບ ແລະ ທົ່ວເຖິງ ເປັນຕົ້ນແມ່ນການເຈັບເປັນ ແລະ ເສຍຊີວິດຂອງພະນັກງານ-ລັດຖະກອນ ແລະ ພະນັກງານບຳນານ ແລະ ສະມາຊິກຄອບຄົວຂອງພະນັກງານ-ລັດຖະກອນທີ່ເຈັບເປັນ ແລະ ເສຍຊີວິດ ແລະ ນະໂຍບາຍດ້ານອື່ນໆ ກໍ່ຍັງບໍ່ມີລະບຽບການພາຍໃນເພື່ອເປັນບ່ອນອີງໃນການຈັດຕັ້ງປະຕິບັດ ແລະ ງົບປະມານຮັບໃຊ້ວຽກງານດັ່ງກ່າວຍັງຈຳກັດ.

**4. ກາລະໂອກາດ ແລະ ສິ່ງທ້າທາຍ.**

**4.1. ກາລະໂອກາດ.**

- ພະນັກງານຂອງຂະແໜງ ອຄ ໄດ້ມີຄວາມຮູ້, ຄວາມສາມາດ ແລະ ມີປະສົບການ ໃນລະດັບທີ່ສາມາດຈັດຕັ້ງປະຕິບັດວຽກງານ ເພື່ອຂັບເຄື່ອນວຽກງານເສດຖະກິດ ໃຫ້ໄປຕາມຈັງຫວະການຂະຫຍາຍຕົວຂອງເສດຖະກິດ-ສັງຄົມ ແຕ່ລະໄລຍະ.
- ຂະແໜງ ອຄ ໄດ້ຮັບການຊ່ວຍເຫຼືອຈາກອົງການຈັດຕັ້ງສາກົນ, ຮູບແບບສອງຝ່າຍ ແລະ ຫຼາຍຝ່າຍລວມທັງພາກພື້ນ ແລະ ສາກົນ ກ່ຽວກັບການໃຫ້ຄວາມຊ່ວຍເຫຼືອທາງດ້ານງົບປະມານ, ຊ່ຽວຊານ ແລະ ເຕັກນິກວິຊາການ ເພື່ອເປັນການສ້າງຄວາມເຂັ້ມແຂງທາງດ້ານວິຊາການ ແລະ ການເຊື່ອມໂຍງເຂົ້າກັບພາກພື້ນ ແລະ ສາກົນ ໃຫ້ແກ່ພະນັກງານທຸກລະດັບແຕ່ສູນກາງຮອດທ້ອງຖິ່ນ.
- ຄະນະນຳກະຊວງ ອຄ ໄດ້ເອົາໃຈໃສ່ ແລະ ໃຫ້ຄວາມສຳຄັນແກ່ວຽກງານຈັດຕັ້ງ ແລະ ພະນັກງານ ເພື່ອສ້າງຄວາມເຂັ້ມແຂງໃຫ້ແກ່ພະນັກງານ-ລັດຖະກອນ ໃນການກໍ່ສ້າງ, ບຳລຸງ ແລະ ບັນຈຸເຂົ້າຕຳແໜ່ງງານທີ່ເໝາະສົມ.

**4.2. ສິ່ງທ້າທາຍ.**

- ລະດັບວິຊາສະເພາະຂອງພະນັກງານທີ່ມີຢູ່ປະຈຸບັນ ເຫັນວ່າ ຍັງບໍ່ທັນແທດເໝາະກັບຕຳແໜ່ງງານ ໝາຍຄວາມວ່າ ວິຊາສະເພາະທີ່ຮຽນມາວິຊາໜຶ່ງ ພັດໄປເຮັດໜ້າທີ່ບໍ່ຕິດພັນກັບວິຊາສະເພາະທີ່ຮຽນມາ.
- ການສ້າງຊ່ຽວຊານສະເພາະດ້ານ ຍັງມີຄວາມຫຍຸ້ງຍາກ ເນື່ອງຈາກສະພາບແວດລ້ອມຂອງອົງກອນ ແລະ ພະນັກງານ-ລັດຖະກອນ ທີ່ບໍ່ເອື້ອອຳນວຍ ເນື່ອງມາຈາກງົບປະມານເພື່ອຈະນຳມາຊຸກຍູ້, ສົ່ງເສີມບັນຫາດັ່ງກ່າວ ຍັງມີຈຳກັດ. ສະນັ້ນ, ພະນັກງານຕ້ອງໄດ້ຊອກຫາແຫຼ່ງທຶນດ້ວຍຕົນເອງ.

**III. ຍຸດທະສາດການພັດທະນາ ແລະ ຄຸ້ມຄອງພະນັກງານ-ລັດຖະກອນ ຂອງຂະແໜງ ອຄ ຮອດປີ 2025 ແລະ ວິໃສທັດຮອດປີ 2030.**

**1. ວິໃສທັດຮອດປີ 2030.**

ຊັບພະຍາກອນມະນຸດຂອງຂະແໜງ ອຄ ມີຄຸນທາດການເມືອງໜັກແໜ້ນ, ມີຄຸນສົມບັດສົມທຳປະຕິວັດ , ມີຄວາມເຂັ້ມແຂງທາງດ້ານວິຊາການ, ທັນເປັນທັນສະໄໝເທື່ອລະກ້າວ, ກົງຈັກການຈັດຕັ້ງກະທັດຮັດ ແລະ ມີນະໂຍບາຍທີ່ດີຕໍ່ພະນັກງານ-ລັດຖະກອນ.

**2. ເປົ້າໝາຍລວມ.**

1) ສ້າງຊັບພະຍາກອນມະນຸດຂອງຂະແໜງ ອຄ ໃຫ້ເຊື່ອມຊຶມທາງດ້ານການເມືອງ-ແນວຄິດຢ່າງເລິກເຊິ່ງ ແລະ ໜັກແໜ້ນ, ມີຄຸນສົມບັດສິນທຳປະຕິວັດ, ມີວິໄນ, ມີຈັນຍາບັນ, ມີຄວາມສາມັກຄີ ແລະ ເຮັດແທ້ທຳຈິງ.
2) ສ້າງຊັບພະຍາກອນມະນຸດຂອງຂະແໜງ ອຄ ໃຫ້ມີຄວາມເຂັ້ມແຂງທາງດ້ານວິຊາການ, ວິຊາສະເພາະ ແລະ ສ້າງເປັນຊ່ຽວຊານສະເພາະດ້ານ.
3) ປັບປຸງກົງຈັກການຈັດຕັ້ງ ນັບແຕ່ສູນກາງຮອດທ້ອງຖິ່ນ ໃຫ້ກະທັດຮັດ, ໂປ່ງໃສ, ໜັກແໜ້ນ ແລະ ສອດຄ່ອງກັບສະພາບຕົວຈິງ.
4) ປະຕິບັດນະໂຍບາຍຕໍ່ພະນັກງານ-ລັດຖະກອນ ໃຫ້ເໝາະສົມ ແລະ ສອດຄ່ອງກັບສະພາບຄວາມເປັນຈິງໃນແຕ່ລະໄລຍະ.
5) ສ້າງຊັບພະຍາກອນມະນຸດຂອງຂະແໜງ ອຄ ໃຫ້ມີຄວາມຮູ້, ຄວາມສາມາດທາງດ້ານລະບົບໄອທີ ໂດຍ ຫັນເປັນທັນສະໄໝເທື່ອລະກ້າວ.

**3. ຍຸດທະສາດຮອດປີ 2025.**

**3.1 ເພີ່ມທະວີການເມືອງ-ແນວຄິດ ໃຫ້ພະນັກງານ-ລັດຖະກອນ ຂອງຂະແໜງ ອຄ.**

**3.1.1 ຈຸດປະສົງ.**

ກໍ່ສ້າງພະນັກງານ-ລັດຖະກອນຂອງຂະແໜງ ອຄ ໃຫ້ມີການເມືອງ-ແນວຄິດທີ່ໜັກແໜ້ນ, ມີຄຸນສົມບັດສິນທຳປະຕິວັດ, ມີຄວາມຈົງຮັກພັກດີຕໍ່ອົງກອນ, ມີຈິນຕະນາການໃໝ່ເພື່ອອຳນວຍຄວາມສະດວກໃຫ້ແກ່ການດຳເນີນທຸລະກິດ, ທັງເປັນຕ່ອງໂສ້ແກ່ດຶງບຸກຄະລາກອນຂອງຂະແໜງ ອຄ ເພື່ອຂັບເຄື່ອນວຽກງານອຸດສາຫະກຳ-ການຄ້າ ໃຫ້ມີການພັດທະນາຕາມແຜນພັດທະນາເສດຖະກິດ-ສັງຄົມແຫ່ງຊາດ ກໍ່ຄືແຜນພັດທະນາອຸດສາຫະກຳ ແລະ ປຸງແຕ່ງ 5 ປີ 2021-2025 ແລະ ແຜນຍຸດທະສາດອື່ນໆ ຂອງຂະແໜງ ອຄ.

**3.1.2 ຄາດໝາຍສູ້ຊົນ.**

1) ເຮັດໃຫ້ພະນັກງານ-ລັດຖະກອນ ຂອງຂະແໜງ ອຄ ມີຄວາມຮັບຮູ້ ແລະ ເຂົ້າໃຈຕໍ່ແນວທາງຂອງພັກ-ລັດ , ກົດໝາຍ ແລະ ລະບຽບການຂອງລັດ ດ້ວຍການເຊື່ອມຊຶມມະຕິ, ຄຳສັ່ງ, ກົດລະບຽບຂອງພັກ, ນະໂຍບາຍ, ຍຸດທະສາດ, ແລະ ລະບຽບການຕ່າງໆຂອງລັດ ລວມທັງການປະຖະກະຖາເນື່ອງໃນວັນສຳຄັນຕ່າງໆຂອງພັກ ແລະ ຂອງຊາດ ໃຫ້ເພີ່ມຂຶ້ນ.
2) ເຮັດໃຫ້ພະນັກງານ-ລັດຖະກອນ ຂອງຂະແໜງ ອຄ ມີຄຸນສົມບັດສິນທຳປະຕິວັດ, ມີລະບຽບວິໄນ, ມີສະຕິຕໍ່ການຈັດຕັ້ງ, ເຄົາລົບກົດໝາຍ, ຮັກອາຊີບຂອງຕົນ, ມີນ້ຳໃຈເອື້ອເຟື້ອເຜື່ອແຜ່, ມີຄວາມສາມັກຄີພາຍໃນ ແລະ ພາຍນອກ.
3) ເຮັດໃຫ້ບຸກຄະລາກອນ ຂອງຂະແໜງ ອຄ ມີຄວາມດຸໝັ່ນ, ອົດທົນຜ່ານຜ່າອຸປະສັກ ແລະ ສິ່ງທ້າທາຍ, ເຮັດວຽກດ້ວຍຄວາມຈິງໃຈ ແລະ ເອົາໃຈໃສ່.
4) ສ້າງຈິດສຳນຶກຮັບໃຊ້ປະຊາຊົນດ້ວຍຄວາມບໍລິສຸດໃຈ, ສະກັດກັ້ນ ແລະ ຕ້ານການສໍ້ລາດບັງຫຼວງ ແລະ ປະກົດການຫຍໍ້ທໍ້ອື່ນໆ ທີ່ເປັນອຸປະສັກຕໍ່ການພັດທະນາເສດຖະກິດ-ສັງຄົມ.

**3.1.3 ວຽກງານຈຸດສຸມ.**

1) ເພີ່ມທະວີການໂຄສະນາເຜີຍແຜ່ແນວທາງນະໂຍບາຍຂອງພັກ, ກົດໝາຍ, ລະບຽບການຂອງລັດ, ຈັດຕັ້ງປາຖະກະຖາເລົ່າມູນເຊື້ອຂອງພັກ ແລະ ຂອງຊາດ ໃຫ້ພະນັກງານ-ລັດຖະກອນ ຂອງຂະແໜງ ອຄ ໃຫ້ທົ່ວເຖິງ ແລະ ເປັນລະບົບຄົບຊຸດ, ຖືກຕ້ອງຕາມເປົ້າໝາຍຜູ້ເຂົ້າຮ່ວມ ແລະ ຕິດພັນກັບຕົວຈິງ.
2) ເພີ່ມທະວີໃຫ້ພະນັກງານ-ລັດຖະກອນ ໄດ້ຮັບການຍົກລະດັບ ທາງດ້ານທິດສະດີການເມືອງ-ການປົກຄອງ ລະດັບຕ່າງໆ ໃນໄລຍະສັ້ນ ແລະ ໄລຍະຍາວ ຢູ່ພາຍໃນ ແລະ ຕ່າງປະເທດ.

3) ເພີ່ມທະວີສຶກສາອົບຮົມທາງດ້ານແນວຄິດ ໃຫ້ແກ່ພະນັກງານ-ລັດຖະກອນ ໃນການອຸທິດຕົນເພື່ອຈັດຕັ້ງປະຕິບັດວຽກງານ ທີ່ການຈັດຕັ້ງໄດ້ມອບໝາຍ ໃຫ້ມີຜົນສຳເລັດ.

4) ສຶກສາອົບຮົມ ແລະ ປູກຈິດສຳນຶກ ໃຫ້ພະນັກງານ-ລັດຖະກອນ ມີລະບຽບວິໄນ, ເຄົາລົບກົດໝາຍ, ລະບຽບການ, ຊື່ສັດ, ມີຈັນຍາບັນ, ຈາລິຍະທຳ, ສະກັດກັ້ນ ແລະ ຕ້ານປະກົດການຫຍໍ້ທໍ້ ແລະ ຕ້ານການສໍ້ລາດບັງຫຼວງ. ນອກຈາກນີ້, ສ້າງຂໍ້ຕົກລົງຂອງທ່ານລັດຖະມົນຕີ ກ່ຽວກັບ ວິໄນລັດຖະກອນຂອງຂະແໜງ ອຄ.

**3.2 ຝຶກອົບຮົມ ແລະ ພັດທະນາ ພະນັກງານ-ລັດຖະກອນ ຂອງຂະແໜງ ອຄ ໃຫ້ມີປະສິດທິພາບ ແລະ ປະສິດທິຜົນສູງ** (Training and Development).

**3.2.1 ຈຸດປະສົງ.**

1) ພັດທະນາພະນັກງານນຳພາ-ຄຸ້ມຄອງ ໃຫ້ມີຄວາມຮູ້, ຄວາມສາມາດ ແລະ ທັນເປັນໜຸ່ມ ໃນການຄຸ້ມຄອງບໍລິຫານສາມາດນຳພາວຽກງານທີ່ຕົນຮັບຜິດຊອບ ໃຫ້ມີປະສິດທິພາບ ແລະ ປະສິດທິຜົນສູງ.

2) ພັດທະນາພະນັກງານ-ລັດຖະກອນ ແຕ່ສູນກາງຮອດທ້ອງຖິ່ນ ໃຫ້ມີຄວາມຮູ້ຄວາມສາມາດທາງດ້ານວິຊາການ, ພາສາຕ່າງປະເທດ, ວິຊາສະເພາະ, ມີຄວາມຊຳນານງານ ແລະ ເພື່ອຕອບສະໜອງຄວາມຮຽກຮ້ອງຕ້ອງການຂອງວຽກງານໃນແຕ່ລະໄລຍະ ໃຫ້ສາມາດເຊື່ອມໂຍງເຂົ້າກັບພາກພື້ນ ແລະ ສາກົນ.

3) ເອົາໃຈໃສ່ກໍ່ສ້າງພະນັກງານສືບທອດໃຫ້ຕໍ່ເນື່ອງ ເພື່ອແນໃສ່ເຮັດໃຫ້ວຽກງານຖືກຈັດຕັ້ງປະຕິບັດເປັນປົກກະຕິ ແລະ ຕໍ່ເນື່ອງ.

4) ເພີ່ມທະວີການຄຸ້ມຄອງ, ຕິດຕາມ, ກວດກາ, ແລະ ປະເມີນຜົນການຈັດຕັ້ງປະຕິບັດວຽກງານຂອງພະນັກງານ-ລັດຖະກອນ ເພື່ອຈັດສັນບຸກຄະລາກອນໃຫ້ຖືກຕ້ອງ ແລະ ແທດເໝາະກັບຄວາມຮູ້ຄວາມສາມາດ, ການທັນເປັນໜຸ່ມ ແລະ ການສ້າງການນຳເພດຍິງ.

**3.2.2 ຄາດໝາຍສູ້ຊົນ.**

1) ສ້າງຫຼັກສູດຝຶກອົບຮົມໃຫ້ຄົບຊຸດ, ຈັດຝຶກອົບຮົມຢ່າງເປັນລະບົບ, ປົກກະຕິ ແລະ ຕໍ່ເນື່ອງ ນັບແຕ່ສູນກາງລົງຮອດທ້ອງຖິ່ນ ຕາມດຳລັດວ່າດ້ວຍການຝຶກອົບຮົມ ແລະ ພັດທະນາພະນັກງານ-ລັດຖະກອນ ໃຫ້ຕິດພັນກັນ ລະຫວ່າງ ພາກທິດສະດີ ແລະ ພາກປະຕິບັດຕົວຈິງ.

2) ສ້າງບຸກຄະລາກອນຂອງຂະແໜງ ອຄ ໂດຍສຶກສາຢູ່ພາຍໃນ ແລະ ຕ່າງປະເທດ ໃຫ້ມີລະດັບວິຊາສະເພາະຊັ້ນສູງ ກວມເອົາ 25% (ປະຈຸບັນກວມເອົາ 22%) ຂຶ້ນໄປ, ປະລິນຍາຕີ ກວມເອົາ 30% ຂຶ້ນໄປ (ປະຈຸບັນກວມເອົາ 58%), ປະລິນຍາໂທ ກວມເອົາ 30% ຂຶ້ນໄປ (ປະຈຸບັນກວມເອົາ 14%), ປະລິນຍາເອກ ກວມເອົາ 5% ຂຶ້ນໄປ (ປະຈຸບັນກວມເອົາ 0,8%).

3) ກຳນົດພະນັກງານນຳພາ-ຄຸ້ມຄອງ ໂດຍເລືອກເຟັ້ນຜູ້ທີ່ມີຄວາມຮູ້, ຄວາມສາມາດ, ມີຄຸນສົມບັດສິນທຳປະຕິວັດ ແລະ ຜູ້ທີ່ມີຄຸນນະພາບ.

4) ຕິດຕາມການຈັດຕັ້ງປະຕິບັດວຽກງານ ຂອງພະນັກງານ-ລັດຖະກອນ ທີ່ໄດ້ກຳນົດໄວ້ຕາມແຜນກຳນົດຕຳແໜ່ງງານຂອງບັນດາກົມ, ພະແນກ ອຄ ແຂວງ ແລະ ອຄ ເມືອງ ຢ່າງເປັນປົກກະຕິ.

**3.2.3 ວຽກງານຈຸດສຸມ.**

1) ຈັດກອງປະຊຸມສຳມະນາແລກປ່ຽນຄວາມຮູ້ທາງດ້ານວິຊາການຂອງແຕ່ລະກົມ, ໂດຍປ່ຽນຜຽນກັນເປັນຜູ້ບັນຍາຍ ແລະ ເຊີນເອົາວິຊາການຂອງແຕ່ລະກົມເຂົ້າຮ່ວມ ເພື່ອແລກປ່ຽນຄວາມຮູ້ທາງດ້ານວິຊາການ 01 ຄັ້ງ/ເດືອນ.

2) ຈັດກອງປະຊຸມສຳມະນາແລກປ່ຽນຄວາມຮູ້ທາງດ້ານວິຊາການ ລະຫວ່າງ ວິຊາການຂອງກະຊວງ ອຄ ແລະ ອຄ ແຂວງ, ເມືອງ 02 ຄັ້ງ/ປີ.

3) ຈັດຝຶກອົບຮົມໃຫ້ພະນັກງານ-ລັດຖະກອນ ໂດຍປະກອບມີ 03 ປະເພດ ຄື: 1. ການຝຶກອົບຮົມປະຖົມນິເທດ (ການຝຶກອົບຮົມລັດຖະກອນເຂົ້າໃໝ່ ແລະ ການຝຶກອົບຮົມລັດຖະກອນທີ່ບັນຈຸໜ້າທີ່ໃໝ່); 2. ການຝຶກອົບຮົມເວລາປະຈໍາການປົກກະຕິ (ການຝຶກອົບຮົມລັດຖະກອນທີ່ມີຕໍາແໜ່ງບໍລິຫານ, ລັດຖະກອນວິຊາການ ແລະ ລັດຖະກອນທີ່ມີຕໍາແໜ່ງວິຊາການ ແລະ ລັດຖະກອນຊ່ວຍວຽກບໍລິຫານ); 3. ການຝຶກອົບຮົມລັດຖະກອນທີ່ໄດ້ຮັບຕໍາແໜ່ງໃໝ່.

4) ລົງຕິດຕາມການຈັດຕັ້ງປະຕິບັດວຽກງານຂອງພະນັກງານ-ລັດຖະກອນ ທີ່ໄດ້ກໍານົດໄວ້ຕາມແຜນກໍານົດຕໍາແໜ່ງງານຂອງບັນດາກົມ, ພະແນກ ອຄ ແຂວງ ແລະ ອຄ ເມືອງ ຢ່າງໜ້ອຍ 01 ຄັ້ງ/ປີ.

## 3.3 ພັດທະນາດ້ານການຈັດຕັ້ງ (Organizational Development).

### 3.3.1 ຈຸດປະສົງ.

1) ປັບປຸງກົງຈັກການຈັດຕັ້ງຂອງຂະແໜງ ອຄ ໃຫ້ຖືກຕ້ອງ ແລະ ສອດຄ່ອງກັບພາລະບົດບາດ ແລະ ຕາມສະພາບການຂະຫຍາຍຕົວຂອງເສດຖະກິດ-ສັງຄົມ.

2) ກໍານົດຕໍາແໜ່ງງານຂອງຂະແໜງ ອຄ ໃຫ້ສໍາເລັດ, ເປັນມາດຕະຖານ ແລະ ມີຄຸນນະພາບ.

3) ການຄຸ້ມຄອງພະນັກງານ-ລັດຖະກອນ ຂອງຂະແໜງ ອຄ ໂດຍນໍາໃຊ້ລະບົບທັນສະໄໝ, ມີລະບົບຕິດຕາມກວດກາການປະຕິບັດໜ້າທີ່ຂອງພະນັກງານ-ລັດຖະກອນ.

4) ເພີ່ມທະວີການຄົ້ນຄວ້າ, ວິເຄາະ, ວິໄຈ ການພິຈາລະນາເລື່ອນຕໍາແໜ່ງຂອງພະນັກງານ-ລັດຖະກອນຂອງຂະແໜງ ອຄ ໃຫ້ມີປະສິດທິຜົນ.

### 3.3.2 ຄາດໝາຍສູ້ຊົນ.

1) ປັບປຸງກົງຈັກການຈັດຕັ້ງຂອງຂະແໜງ ອຄ ໃຫ້ຖືກຕ້ອງ ແລະ ສອດຄ່ອງກັບທິດຊີ້ນໍາຂອງຈັດຕັ້ງສູນກາງທີ່ໄດ້ວາງອອກ "ການຈັດຕັ້ງໃຫ້ກະທັດຮັດ, ໂປ່ງໃສ, ໜັກແໜ້ນ ແລະ ສອດຄ່ອງກັບສະພາບຕົວຈິງ".

2) ກໍານົດຕໍາແໜ່ງງານຂອງຂະແໜງ ອຄ ໃຫ້ສໍາເລັດ ແລະ ສັບຊ້ອນພະນັກງານໃສ່ຕາມຕໍາແໜ່ງງານໃຫ້ແທດເໝາະກັບວິຊາສະເພາະ ແລະ ບັນຈຸພະນັກງານແຕ່ຂັ້ນສູນກາງຮອດທ້ອງຖິ່ນໃຫ້ແທດເໝາະຕາມທິດ 3 ສ້າງ ແລະ ແກ້ໄຂບັນຫາພະນັກງານເຫຼືອບໍ່ພໍພາຍໃນຂະແໜງ ອຄ ໃຫ້ເໝາະສົມ.

3) ການຄຸ້ມຄອງພະນັກງານ-ລັດຖະກອນ ຂອງຂະແໜງ ອຄ ແຕ່ສູນກາງຮອດທ້ອງຖິ່ນ ໂດຍນໍາໃຊ້ລະບົບການຄຸ້ມຄອງເງິນເດືອນຂອງພະນັກງານ-ລັດຖະກອນ ຂອງກະຊວງພາຍໃນ ແລະ ຊອກຫາວິທີຄຸ້ມຄອງດ້ວຍລະບົບໄອທີ ທີ່ທັນສະໄໝ.

4) ການເລື່ອນຂັ້ນຕໍາແໜ່ງ ແລະ ສັບຊ້ອນ, ຈັດວາງ ພະນັກງານນໍາພາ-ຄຸ້ມຄອງຕ້ອງອີງໃສ່ຜົນງານ ຫຼື ມີຜົນສໍາເລັດຕົວຈິງຂອງວຽກງານຕາມຕໍາແໜ່ງງານ ແລະ ມາດຖານທີ່ໄດ້ກໍານົດ, ມີການແຂ່ງຂັນຢ່າງສະເໝີພາບ ແລະ ຍຸດຕິທໍາ.

### 3.3.3 ວຽກງານຈຸດສຸມ.

1) ປັບປຸງກົງຈັກການຈັດຕັ້ງຂອງຂະແໜງ ອຄ ແຕ່ສູນກາງຮອດທ້ອງຖິ່ນ ໃຫ້ສໍາເລັດ ຕາມທິດຊີ້ນໍາຂອງກະຊວງພາຍໃນ ໃຫ້ສໍາເລັດ ແລະ ສາມາດຈັດຕັ້ງປະຕິບັດໃນປີ 2022.

2) ກໍານົດຕໍາແໜງງານຂອງຂະແໜງ ອຄ ແຕ່ສູນກາງຮອດທ້ອງຖິ່ນ ໃຫ້ສໍາເລັດ ແລະ ສາມາຈັດຕັ້ງປະຕິບັດໃນປີ 2022.

3) ສົມທົບກັບກະຊວງພາຍໃນ ກ່ຽວກັບການປັບປຸງຖານຂໍ້ມູນພະນັກງານຂັ້ນ ອຄ ແຂວງ, ອຄ ເມືອງ ໂດຍນໍາໃຊ້ລະບົບການຄຸ້ມຄອງເງິນເດືອນຂອງພະນັກງານ-ລັດຖະກອນ ຂອງກະຊວງພາຍໃນ ໂດຍໃຫ້ສາມາດຈັດຕັ້ງປະຕິບັດໄດ້ໃນປີ 2022.

4) ສ້າງ ແລະ ປັບປຸງລະບຽບຄຸ້ມຄອງພະນັກງານ-ລັດຖະກອນຂອງຂະແໜງ ອຄ ກ່ຽວກັບການເລື່ອນຊັ້ນຕໍາແໜ່ງ, ຊັບຊ້ອນ, ຈັດວາງພະນັກງານຂອງຂະແໜງ ອຄ ແລະ ມາດຕະຖານຂອງພະນັກງານຂະແໜງ ອຄ ໃຫ້ເປັນລະບົບຄົບຊຸດ ໃຫ້ສໍາເລັດໃນປີ 2022.

**3.4 ພັດທະນາວິຊາຊີບ ພະນັກງານ-ລັດຖະກອນ** (Career Development).

ແຜນການພັດທະນາບຸກຄະລາກອນ ພະນັກງານ-ລັດຖະກອນ ຂອງຂະແໜງ ອຄ ແຕ່ປີ 2021-2025 ໄດ້ລະບຸໄວ້ຢູ່ໃນເອກະສານຊ້ອນທ້າຍ ເຊັ່ນ:

1) ຕາຕະລາງແຜນຄວາມຕ້ອງການຍົກລະດັບວິຊາສະເພາະຂອງພະນັກງານ ຂອງແໜງ ອຄ ແຕ່ປີ 2021-2025.
2) ຕາຕະລາງແຜນຄວາມຕ້ອງການຝຶກອົບຮົມ (ຝຶກອົບຮົມໄລຍະສັ້ນ, ໄລຍະຍາວ ແຕ່ປີ 2021-2025 ພາຍໃນ ແລະ ຕ່າງປະເທດ.
3) ຕາຕະລາງແຜນຮັບນັກຮຽນຂອງວິທະຍາໄລການຄ້າ ສົກປີ 2021-2025.

**3.5 ສ້າງຊັບພະຍາກອນມະນຸດຂອງຂະແໜງ ອຄ ໃຫ້ມີຄວາມຮູ້, ຄວາມສາມາດທາງດ້ານການນໍາໃຊ້ເຕັກໂນໂລຊີດີຈີຕອນ ແລະ ICT ເຂົ້າໃນການພັດທະນາວຽກງານ ອຄ ເພື່ອຫັນເປັນທັນສະໄໝເທື່ອລະກ້າວ.**

**3.5.1 ຈຸດປະສົງ.**

1) ສ້າງບຸກຄະລາກອນຂອງຂະແໜງ ອຄ ໃຫ້ສາມາດນໍາໃຊ້ລະບົບການສໍາເນົາເອກະ ສານທາງດ້ານເອເລັກໂຕຣນິກ.
2) ສ້າງຄວາມເຂັ້ມແຂງໃຫ້ແກ່ບຸກຄະລາກອນຂອງຂະແໜງ ອຄ ໃຫ້ສາມາດນໍາໃຊ້ລະບົບ ICT ໄດ້ຢ່າງມີປະສິດທິຜົນ.
3) ສ້າງຄວາມເຂັ້ມແຂງໃຫ້ແກ່ບຸກຄະລາກອນຂອງຂະແໜງ ອຄ ໃຫ້ສາມາດຈັດກອງປະຊຸມຜ່ານລະບົບ (Video Conference) ໄດ້ຢ່າງມີປະສິດທິຜົນ.
4) ສ້າງຄວາມເຂັ້ມແຂງໃຫ້ແກ່ບຸກຄະລາກອນຂອງຂະແໜງ ອຄ ໃຫ້ສາມາດນໍາໃຊ້ ແລະ ຄຸ້ມຄອງລະບົບອອກໃບອະນຸຍາດຕ່າງໆທາງອອນລາຍ ໄດ້ຢ່າງມີປະສິດທິຜົນ.

**3.5.2 ຄາດໝາຍສູ້ຊົນ.**

1) ສູ້ຊົນໃຫ້ໄດ້ນໍາໃຊ້ໂປແກມການສໍາເນົາເອກະສານທາງເອເລັກໂຕຣນິກ ຢູ່ຂັ້ນກະຊວງ, ພະແນກ ອຄ ແຂວງ, ນະຄອນຫຼວງ ແລະ ຫ້ອງການ ອຄ ເມືອງ, ນະຄອນ ໃນປີ 2022.
2) ພັດທະນາລະບົບ ICT ຂອງກະຊວງ ແລະ ທ້ອງຖິ່ນ ໃຫ້ສາມາດຈັດຕັ້ງປະຕິບັດໄດ້ ໂດຍພື້ນຖານ ໃນປີ 2023.
3) ຕິດຕັ້ງລະບົບປະຊຸມທາງໄກ (Video Conference) ຂັ້ນກະຊວງ, ພະແນກ ອຄ ແຂວງ, ນະຄອນຫຼວງ ແລະ ຫ້ອງການ ອຄ ເມືອງ, ນະຄອນ ໃນປີ 2022.
4) ສາມາດນໍາໃຊ້ລະບົບການອອກ ໃບອະນຸຍາດທາງອອນລາຍ ແລະ ລະບົບອອນລາຍຕ່າງໆ ເຊັ່ນ: E-Commerce, Online, E-manufacturing license, ODOP APP, CA-Certificate of Authority ແລະ ອື່ນໆ ໃນປີ 2025.

**3.5.3 ວຽກງານຈຸດສຸມ.**

1) ສ້າງໂປແກມການສໍາເນົາເອກະສານທາງເອເລັກໂຕຣນິກ ສ້າງຄວາມສະດວກໃຫ້ແກ່ບັນດາກົມວິຊາການພາຍໃນກະຊວງ ແລະ ທ້ອງຖິ່ນໃຫ້ສາມາດເກັບມ້ຽນ ແລະ ສໍາເນົາເອກະການຜ່ານລະບົບດັ່ງກ່າວ ໃຫ້ມີປະສິດທິພາບ, ວ່ອງໄວ ແລະ ທັນສະໄໝ.
2) ຈັດຕັ້ງປະຕິບັດແຜນພັດທະນາລະບົບ ICT ຂອງກະຊວງ ແລະ ທ້ອງຖິ່ນ.

3) ປັບປຸງພື້ນຖານໂຄງລ່າງ, ຕິດຕັ້ງລະບົບປະຊຸມທາງໄກ (Video Conference) ແຕ່ສູນກາງຮອດທ້ອງຖິ່ນ.
4) ຈັດຕັ້ງປະຕິບັດລະບົບອອກໃບຢັ້ງຢືນແຫຼ່ງກຳເນີດສິນຄ້າທາງເອເລັກໂຕຣນິກທາງອອນລາຍ (Online E-CO), ການຊື້-ຂາຍສິນຄ້າຜ່ານທາງ (E-Commerce, Online), ລະບົບການອອກອະນຸຍາດອຸດສາຫະກຳທາງເອເລັກໂຕຣນິກ (E-manufacturing license), ການນຳໃຊ້ແອບພະລິກເຄຊັນຜ່ານທາງໂທລະສັບມືຖື (ODOP APP), ອອກໃບໃບຢັ້ງຢືນການມີຕົວຕົນ (CA-Certificate of Authority) ແລະ ລະບົບອອນລາຍຕ່າງໆ ທີ່ຕິດພັນກັບວຽກງານຂອງຂະແໜງ ອຄ ແຕ່ສູນກາງຮອດທ້ອງຖິ່ນ.

## IV. ການຕິດຕາມ, ປະເມີນຜົນ ແລະ ການລາຍງານ.

ເພື່ອເປັນການຕິດຕາມ, ປະເມີນຜົນ ແລະ ການລາຍງານຄວາມຄືບໜ້າຂອງການຈັດຕັ້ງປະຕິບັດແຜນຍຸດທະສາດພັດທະນາຊັບພະຍາກອນມະນຸດຂອງຂະແໜງ ອຄ ໃຫ້ແກ່ຄະນະນຳກະຊວງ, ຄະນະກຳມາທິການແຫ່ງຊາດ ເພື່ອການພັດທະນາຊັບພະຍາກອນມະນຸດ. ສະນັ້ນ, ຕ້ອງໄດ້ມີຂອບເຂດການປະເມີນຜົນ ດັ່ງລຸ່ມນີ້:

1) ແຜນຍຸດທະສາດພັດທະນາຊັບພະຍາກອນມະນຸດຂອງຂະແໜງ ອຄ ແຕ່ປີ 2021-2025;
2) ແຜນຄວາມຕ້ອງການຍົກລະດັບວິຊາສະເພາະຂອງພະນັກງານຂອງຂະແໜງ ອຄ ແຕ່ປີ 2021-2025;
3) ແຜນຄວາມຕ້ອງການຝຶກອົບຮົມ (ຝຶກອົບຮົມໄລຍະສັ້ນ, ໄລຍະຍາວ ແຕ່ປີ 2021-2025 ພາຍໃນ ແລະ ຕ່າງປະເທດ.
4) ແຜນຮັບນັກຮຽນຂອງວິທະຍາໄລການຄ້າ ສົກປີ 2021-2025.

## V. ມາດຕະການຈັດຕັ້ງປະຕິບັດ.

1) ເພີ່ມທະວີການນຳພາ-ຊີ້ນຳຂອງຄະນະພັກ, ຄະນະນຳກະຊວງ ອຄ ລວມເຖິງຄະນະນຳຂອງພະແນກ ອຄ ແຂວງ ແລະ ຫ້ອງການ ອຄ ເມືອງ ໃນການຈັດຕັ້ງປະຕິບັດຍຸດທະສາດພັດທະນາຊັບພະຍາກອນມະນຸດຂອງຂະແໜງ ອຄ 2021-2025 ໃຫ້ປະກົດຜົນເປັນຈິງ.
2) ບັນດາກົມ, ຫ້ອງການ, ສະຖາບັນອຸດສາຫະກຳ ແລະ ການຄ້າ ລວມເຖິງ ພະແນກ ອຄ ແຂວງ ແລະ ຫ້ອງການ ອຄ ເມືອງ ໃນຂອບເຂດທົ່ວປະເທດ ໃຫ້ນຳເອົາເນື້ອໃນຂອງແຜນຍຸດທະສາດດັ່ງກ່າວ ເຜີຍແຜ່ໃຫ້ພະນັກງານ-ລັດຖະກອນ ທີ່ຢູ່ໃນການຄຸ້ມຄອງຂອງຕົນໃຫ້ທົ່ວເຖິງ ແລະ ຈັດຕັ້ງປະຕິບັດໃຫ້ມີປະສິດທິຜົນ.
3) ສ້າງແຜນງົບປະມານທີ່ເໝາະສົມ ເຂົ້າໃນການພັດທະນາຊັບພະຍາກອນມະນຸດ ຂອງຂະແໜງ ອຄ 2021-2025 ໂດຍຂຶ້ນແຜນງົບປະມານໂຄງການທັງພາຍໃນ ແລະ ຂໍການຊ່ວຍເຫຼືອຈາກຕ່າງປະເທດ.
4) ສ້າງລະບົບເກັບກຳຂໍ້ມູນ ດ້ານການພັດທະນາຊັບພະຍາກອນມະນຸດ ເພື່ອຕິດຕາມປະເມີນຜົນ, ລາຍງານວຽກງານການພັດທະນາຊັບພະຍາກອນມະນຸດ ໃຫ້ທັນການ ແລະ ຊັດເຈນໃນແຕ່ລະໄລຍະ.
5) ກົມຈັດຕັ້ງ ແລະ ພະນັກງານ, ກະຊວງ ອຄ ເປັນໃຈກາງປະສານງານກັບບັນດາກົມ, ຫ້ອງການ, ສະຖາບັນ, ພະແນກ ອຄ ແຂວງ ແລະ ຫ້ອງການ ອຄ ເມືອງ ໃນຂອບເຂດທົ່ວປະເທດ ໃນການຕິດຕາມ, ປະເມີນຜົນການຈັດຕັ້ງປະຕິບັດວຽກງານດັ່ງກ່າວ.

## ເອກະສານຊ້ອນທ້າຍ

1. ແຜນປະຕິບັດງານການພັດທະນາ ແລະ ບຸກຄະລາກອນ ຂອງຂະແໜງອຸດສາຫະກໍາ ແລະ ການຄ້າ ແຕ່ປີ 2021 - 2025.
2. ຕາຕະລາງສັງລວມຂໍ້ມູນດ້ານວິຊາສະເພາະຂອງພະນັກງານລັດຖະກອນໃນປະຈຸບັນ ຂອງຂະແໜງ ອຄ ປີ 2021.
3. ຕາຕະລາງສັງລວມສະຖິຕິລັດຖະກອນຂອງຂະແໜງ ອຄ ປີ 2021 ແຍກຕາມເກນອາຍຸ.
4. ຕາຕະລາງແຜນຄວາມຕ້ອງການຍົກລະດັບວິຊາສະເພາະຂອງພະນັກງານກະຊວງອຸດສາຫະກໍາ ແລະ ການຄ້າ ແຕ່ປີ 2021-2025.
5. ຕາຕະລາງແຜນຄວາມຕ້ອງການຝຶກອົບຮົມ ຂອງພະນັກງານກະຊວງອຸດສາຫະກໍາ ແລະ ການຄ້າ ແຕ່ປີ 2021-2025 (ຝຶກອົບຮົມໄລຍະສັ້ນ, ໄລຍະຍາວ ແຕ່ປີ 2021-2025 ພາຍໃນ ແລະ ຕ່າງປະເທດ)
6. ຕາຕະລາງແຜນຮັບນັກຮຽນຂອງວິທະຍາໄລການຄ້າ ປີ 2021-2025.
7. ຕາຕະລາງແຜນການຮັບອຸດໜູນບໍານານ ແຕ່ປີ 2021-2025.

## ແຜນປະຕິບັດງານການພັດທະນາ ແລະ ບຸກຄະລາກອນ ຂອງຂະແໜງອຸດສາຫະກຳ ແລະ ການຄ້າ ແຕ່ປີ 2021 - 2025

| ຍຸດທະສາດ | ວຽກງານຈຸດສຸມ | ໂຄງການ | ງົບປະມານ | ຜູ້ຮັບຜິດຊອບ |
|---|---|---|---|---|
| 1. ເພີ່ມທະວີການເມືອງ-ແນວຄິດ ໃຫ້ພະນັກງານ-ລັດຖະກອນ ຂອງຂະແໜງ ອຄ | 1) ເພີ່ມທະວີການໂຄສະນາ ເຜີຍແຜ່ແນວທາງນະໂຍບາຍຂອງພັກ, ກົດໝາຍ, ລະບຽບການຂອງລັດ, ຈັດຕັ້ງປາຖະກະຖາເລົ່າມູນເຊື້ອຂອງພັກ ແລະ ຂອງຊາດ ໃຫ້ພະນັກງານ-ລັດຖະກອນ ຂອງຂະແໜງ ອຄ ໃຫ້ທົ່ວເຖິງ ແລະ ເປັນລະບົບຄົບຊຸດ, ຖືກຕ້ອງຕາມເປົ້າໝາຍຜູ້ເຂົ້າຮ່ວມ ແລະ ຕິດພັນກັບຕົວຈິງ. | 1) ໂຄສະນາ, ເຜີຍແຜ່ແນວທາງຂອງພັກ, ກົດໝາຍ, ລະບຽບການຂອງລັດແຕ່ລະໄລຍະ.<br>2) ຈັດຕັ້ງປາຖະກະຖາເລົ່າມູນເຊື້ອ ໃນວັນສຳຄັນຕ່າງໆຂອງຊາດ. | ກະຊວງ ອຄ | ກຈພງ |
| | 2) ເພີ່ມທະວີໃຫ້ພະນັກງານ-ລັດຖະກອນ ໄດ້ຮັບການຍົກລະດັບ ທາງດ້ານທິດສະດີການເມືອງ-ການປົກຄອງລະດັບຕ່າງໆ ໃນໄລຍະສັ້ນ ແລະ ໄລຍະຍາວ ຢູ່ພາຍໃນ ແລະ ຕ່າງປະເທດ. | 1) ຈັດຊຸດຝຶກອົບຮົມ ທິດສະດີການ ເມືອງ-ການປົກຄອງໄລຍະສັ້ນຢູ່ ອຄ.<br>2) ສົ່ງພະນັກງານ ໄປຍົກລະດັບທິດສະດີການເມືອງ-ການປົກຄອງ ລະດັບຕ່າງໆຢູ່ພາຍໃນ ແລະ ຕ່າງປະເທດ. | ກະຊວງ ອຄ | - ກຈພງ<br>- ສອຄ |
| | 3) ເພີ່ມທະວີສຶກສາອົບຮົມທາງດ້ານແນວຄິດ ໃຫ້ແກ່ພະນັກງານ-ລັດຖະກອນ ໃນການອຸທິດຕົນເພື່ອຈັດຕັ້ງປະຕິບັດວຽກງານ ທີ່ການຈັດຕັ້ງໄດ້ມອບໝາຍໃຫ້. | 1) ເພື່ອທະວີຄວາມຮັບຜິດຊອບ ແລະ ປັບປຸງແບບແຜນວິທີເຮັດວຽກ ໃຫ້ແກ່ພະນັກງານຂະແໜງ ອຄ. | ກະຊວງ ອຄ | ກຈພງ |
| | 4) ສຶກສາອົບຮົມ ແລະ ປູກຈິດສຳນຶກ ໃຫ້ພະນັກງານ-ລັດຖະກອນ ມີລະບຽບວິໄນ, ເຄົາລົບກົດໝາຍ, ລະບຽບການ, ຊື່ສັດ, ມີຈັນຍາບັນ, ຈາລິຍະທຳ, ສະກັດກັ້ນ ແລະ | 1) ປະເມີນຄຸນສົມບັດ ແລະ ຈັນຍາບັນຂອງພະນັກງານຂະແໜງ ອຄ.<br>2) ສ້າງຂໍ້ຕົກລົງຂອງທ່ານລັດຖະມົນຕີ ກ່ຽວ | ກະຊວງ ອຄ | - ກຈພງ<br>- ກກກ |

| | | | | |
|---|---|---|---|---|
| | ຕ້ານປະກົດການຫຍໍ້ທໍ້, ແລະ ຕ້ານການສໍ້ລາດບັງຫຼວງ, ນອກຈາກນີ້ ສ້າງຂໍ້ຕົກລົງຂອງທ່ານລັດຖະມົນຕີ ກ່ຽວກັບວິໄນລັດຖະກອນຂອງຂະແໜງ ອຄ. | ກັບວິໄນລັດຖະກອນຂອງຂະແໜງ ອຄ. | | |
| **2. ຝຶກອົບຮົມ ແລະ ພັດທະນາພະນັກງານ-ລັດຖະກອນ ຂອງຂະແໜງ ອຄ ໃຫ້ມີປະສິດທິພາບ ແລະ ປະສິດທິຜົນສູງ** | 1) ຈັດກອງປະຊຸມສຳມະນາແລກປ່ຽນຄວາມຮູ້ທາງດ້ານວິຊາການຂອງແຕ່ລະກົມ, ໂດຍປ່ຽນຜຽນກັນເປັນຜູ້ບັນຍາຍ, ແລະ ເຊີນເອົາວິຊາການຂອງແຕ່ລະກົມເຂົ້າຮ່ວມ ເພື່ອແລກປ່ຽນຄວາມຮູ້ທາງດ້ານວິຊາການ 01 ຄັ້ງ/ເດືອນ. | 1) ຈັດຝຶກອົບຮົມ ເພື່ອພັດທະນາຂີດຄວາມສາມາດ ຂອງພະນັກງານ-ລັດ ຖະກອນຂອງຂະແໜງ ອຄ ຕາມແຜນຝຶກອົບຮົມ. | - ກະຊວງ ອຄ<br>- ອົງການຈັດ ຕັ້ງສາກົນ | - ບັນດາກົມ<br>- ອົງການຈັດຕັ້ງສາກົນ |
| | 2) ຈັດກອງປະຊຸມສຳມະນາ ແລກປ່ຽນຄວາມຮູ້ທາງດ້ານວິຊາການ ລະຫວ່າງວິຊາການ ຂອງກະຊວງ ອຄ ແລະ ອຄ ແຂວງ, ເມືອງ 02 ຄັ້ງ/ປີ. | 1) ຈັດຝຶກອົບຮົມໃຫ້ພະນັກງານ ອຄ ແຂວງ ແລະ ອຄ ເມືອງ. | ກະຊວງ ອຄ | |
| | 3) ຈັດຝຶກອົບຮົມໃຫ້ພະນັກງານ - ລັດຖະກອນ ໂດຍປະກອບມີ 03 ປະເພດ ຄື: 1. ການຝຶກອົບຮົມປະຖົມນິເທດ (ການຝຶກອົບຮົມລັດຖະກອນເຂົ້າໃໝ່ ແລະ ການຝຶກອົບຮົມລັດຖະກອນທີ່ບັນຈຸໜ້າທີ່ໃໝ່); 2. ການຝຶກອົບຮົມເວລາປະຈຳການປົກກະຕິ (ການຝຶກອົບຮົມລັດຖະກອນທີ່ມີຕຳແໜ່ງບໍລິຫານ, ລັດຖະກອນວິຊາການ ແລະ ລັດຖະກອນທີ່ມີຕຳແໜ່ງວິຊາການ ແລະ ລັດຖະກອນຊ່ວຍວຽກບໍລິ ຫານ); 3. ການຝຶກອົບຮົມລັດຖະກອນທີ່ໄດ້ຮັບຕຳແໜ່ງໃໝ່. | 1) ຈັດຝຶກອົບຮົມຕາມແຜນຝຶກອົບຮົມ. | ກະຊວງ ອຄ | ກຈພງ |
| | 4) ລົງຕິດຕາມການຈັດຕັ້ງປະຕິບັດວຽກງານ ຂອງພະນັກ | **1)** ລົງໄປຊຸກຍູ້ຕິດຕາມ ການຈັດຕັ້ງປະຕິບັດ | ກະຊວງ | ກຈພງ |

| | | | | |
|---|---|---|---|---|
| | ງານ-ລັດຖະກອນ ທີ່ໄດ້ກຳນົດໄວ້ຕາມແຜນກຳນົດຕຳແໜ່ງງານຂອງບັນດາກົມ, ພະແນກ ອຄ ແຂວງ ແລະ ອຄ ເມືອງ ຢ່າງໜ້ອຍ 01 ຄັ້ງ/ປີ. | ວຽກງານ ຂອງພະນັກງານ-ລັດຖະກອນ ຂອງບັນດາກົມ, ພະແນກ ອຄແຂວງ ແລະ ອຄ ເມືອງ. | ອຄ | |
| **3. ພັດທະນາດ້ານການຈັດຕັ້ງ** | 1) ປັບປຸງກົງຈັກການຈັດຕັ້ງຂອງຂະແໜງ ອຄ ແຕ່ສູນກາງຮອດທ້ອງຖິ່ນ ໃຫ້ສຳເລັດ ຕາມທິດຊີ້ນຳຂອງກະຊວງພາຍໃນ ແລະ ສາມາດຈັດຕັ້ງປະຕິບັດໃນປີ 2022. | 1) ປັບປຸງກົງຈັກການຈັດຕັ້ງ ຂອງຂະແໜງ ອຄ ໄປຕາມຄຳສັ່ງຂອງນາຍົກລັດຖະມົນຕີ ເລກທີ 03/ນຍ.<br>2) ມອບໃຫ້ ອຄ ແຂວງ ແລະ ອຄ ເມືອງ ເພື່ອປັບປຸງກົງຈັກການຈັດຕັ້ງ ໃຫ້ກະທັດຮັດ. | ກະຊວງ ອຄ | ກຈພງ |
| | 2) ກຳນົດຕຳແໜ່ງງານຂອງຂະແໜງ ອຄ ແຕ່ສູນກາງຮອດທ້ອງຖິ່ນ ໃຫ້ສຳເລັດ ແລະ ສາມາຈັດຕັ້ງປະຕິບັດໃນປີ 2022. | 1) ສົມທົບກັບບັນດາກົມ ເພື່ອກຳນົດຕຳແໜ່ງງານຂັ້ນກະຊວງໃຫ້ສຳເລັດ.<br>2) ສົມທົບກັບພະແນກ ອຄ ແຂວງ, ເມືອງ ເພື່ອປັບປຸງໃຫ້ສຳເລັດ. | ກະຊວງ ອຄ | ກຈພງ |
| | 3) ສົມທົບກັບກະຊວງພາຍໃນ ກ່ຽວກັບການປັບປຸງຖານຂໍ້ມູນພະນັກງານຂັ້ນ ອຄ ແຂວງ, ອຄ ເມືອງ ໂດຍນຳໃຊ້ລະບົບການຄຸ້ມຄອງເງິນເດືອນຂອງພະນັກງານ-ລັດຖະກອນ ຂອງກະຊວງພາຍໃນ ໂດຍໃຫ້ສາມາດຈັດຕັ້ງປະຕິບັດໄດ້ໃນປີ 2022. | 1) ປັບປຸງຖານຂໍ້ມູນຄຸ້ມຄອງພະນັກງານແຕ່ຂັ້ນສູນກາງຮອດຖ້ອງຖິ່ນ. | ກະຊວງ ອຄ | ກຈພງ |
| | 4) ສ້າງ ແລະ ປັບປຸງລະບຽບຄຸ້ມຄອງພະນັກງານ-ລັດຖະກອນຂອງຂະແໜງ ອຄ ກ່ຽວກັບການເລື່ອນຊັ້ນຕຳແໜ່ງ, ຊັບຊ້ອນ, ຈັດວາງພະນັກງານຂອງຂະແໜງ ອຄ ແລະ ມາດຕະຖານຂອງພະນັກງານຂະແໜງ ອຄ ໃຫ້ເປັນລະບົບ | 1) ສ້າງລະບຽບຄຸ້ມຄອງພະນັກງານ-ລັດຖະກອນຂອງຂະແໜງ ອຄ ໃຫ້ເປັນລະບົບຄົບຊຸດ. | ກະຊວງ ອຄ | ກຈພງ |

| | | | | |
|---|---|---|---|---|
| | ຄົບຊຸດ ໃຫ້ສຳເລັດໃນປີ 2022. | | | |
| **4. ພັດທະນາວິຊາຊີບພະນັກງານ-ລັດຖະກອນ** | 1) ຕາຕະລາງແຜນຄວາມຕ້ອງການຍົກລະດັບວິຊາສະເພາະຂອງພະນັກງານ. | 1) ນຳສົ່ງພະນັກງານ ໄປຍົກລະດັບວິຊາສະເພາະຕາມແຜນກຳນົດຕຳແໜ່ງງານ. | ກະຊວງ ອຄ | - ກຈພງ |
| | 2) ຕາຕະລາງແຜນຄວາມຕ້ອງການຝຶກອົບຮົມ (ຝຶກອົບຮົມໄລຍະສັ້ນ, ໄລຍະຍາວ ແຕ່ປີ 2021-2025 ພາຍໃນ ແລະ ຕ່າງປະເທດ. | 1) ຈັດຕັ້ງປະຕິບັດຕາມແຜນຝຶກອົບຮົມ. | ກະຊວງ ອຄ | ບັດດາກົມ ກ່ຽວຂ້ອງ |
| | 3) ຕາຕະລາງແຜນຮັບນັກສຶກສາຂອງວິທະຍາໄລການຄ້າ ສົກປີ 2021-2025. | 1) ການເປີດການຮຽນ, ການສອນຂອງວິທະຍາໄລການຄ້າ. | ຄ່າຮຽນ | ສອຄ |
| **5. ສ້າງຊັບພະຍາກອນມະນຸດຂອງຂະແໜງ ອຄ ໃຫ້ມີຄວາມຮູ້, ຄວາມສາມາດທາງດ້ານການນຳໃຊ້ເຕັກໂນໂລຊີດີຈີຕອນ** | 1) ສ້າງໂປແກມການສຳເນົາເອກະສານ ທາງເອເລັກໂຕຣນິກ ສ້າງຄວາມສະດວກ ໃຫ້ແກ່ບັນດາກົມວິຊາການພາຍໃນກະຊວງ ແລະ ທ້ອງຖິ່ນໃຫ້ສາມາດເກັບມ້ຽນ ແລະ ສຳເນົາເອກະການຜ່ານລະບົບດັ່ງກ່າວ ໃຫ້ມີປະສິດທິພາບ, ວ່ອງໄວ ແລະ ທັນສະໄໝ. | 1) ໂຄງການ E-filling ຂອງກະຊວງ ອຄ | ກະຊວງ ອຄ | - ກຜຮ |
| **ແລະ ICT ເຂົ້າໃນການພັດທະນາວຽກງານອຸດ** | 2) ຈັດຕັ້ງປະຕິບັດແຜນພັດທະນາລະບົບ ICT ຂອງກະຊວງ ແລະ ທ້ອງຖິ່ນ. | 1) ໂຄງການຂອງກົມ ຜຮ | | |
| **ສາຫະກຳ ແລະ ການຄ້າ ເພື່ອຫັນເປັນທັນສະໄໝ** | 2) ປັບປຸງພື້ນຖານໂຄງລ່າງ, ຕິດຕັ້ງລະບົບປະຊຸມທາງໄກ (Video Conference) ແຕ່ສູນກາງຮອດທ້ອງຖິ່ນ. | 2) ໂຄງການຂອງກົມ ຜຮ | | |

| | | | | |
|---|---|---|---|---|
